# ຄູ່ມືພາກສະໜາມ:

## ຫຼັກການສາມດາວ
## ສໍາລັບ ນໍ້າສະອາດ, ສຸຂະອະນາໄມ ແລະ ຄວາມສະອາດ (WASH)
## ໃນໂຮງຮຽນ



ງ່າຍດາຍ • ຜັນຂະຫຍາຍໄດ້ • ມີຄວາມຍືນຍົງ










giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

unicef

## ບົດສະແດງຄວາມຂອບໃຈ

ຫຼັກການສາມດາວ ສໍາລັບ ນໍ້າສະອາດ, ສຸຂະອະນາໄມ ແລະ ຄວາມສະອາດ (WASH) ໃນໂຮງຮຽນ ໄດ້ຮັບການອອກແບບມາເພື່ອປັບປຸງປະສິດທິຜົນຂອງແຜນງານການປ່ຽນແປງພຶດຕິກໍາດ້ານສຸຂະອະນາໄມສໍາລັບເດັກນ້ອຍ ແລະ ສົ່ງເສີມແຜນງານລິເລີ່ມຂອງອົງການ UNICEF ຢ່າງກວ້າງຂວາງໃນໂຮງຮຽນທີ່ເປັນມິດຕໍ່ເດັກ ແລະ 'ໂຄງການສຸຂະພາບດີໃນໂຮງຮຽນ (Fit for School)' ຂອງອົງການ GIZ, ເຊິ່ງສົ່ງເສີມສະພາບແວດລ້ອມໃນການຮຽນຮູ້ທີ່ປອດໄພ, ມີສຸຂະພາບທີ່ດີ ແລະ ໄດ້ຮັບການປົກປ້ອງ.

UNICEF ແລະ GIZ ຂໍສະແດງຄວາມຂອບໃຈຕໍ່ຫຼາຍໆທ່ານທີ່ໄດ້ປະກອບສ່ວນຄວາມຮູ້ ໃນການພັດທະນາແນວຄວາມຄິດ ຫຼັກການສາມດາວ ສໍາລັບ WASH ໃນໂຮງຮຽນ ແລະ ສໍາລັບຜູ້ທີ່ໄດ້ໃຫ້ການສະໜັບສະໜູນການສ້າງ ຄູ່ມືພາກສະໜາມສະບັບນີ້.

ບັນດາທ່ານດັ່ງຕໍ່ໄປນີ້ ໄດ້ໃຫ້ຂໍ້ມູນ ແລະ ໃຫ້ຄໍາແນະນໍາໃນການສ້າງຄູ່ມືສະບັບນີ້: Zhenbo Yang (ຈີນ), Mamita Bora Thakkar (ອິນເດຍ), Bishnu Pokhrel (ມົງໂກເລຍ), Anu Pudyal Gautam (ເນປານ), Emily Bamford, Therese Dooley, Greg Keast, Bob Linney, Catherine Rutgers, Murat Sahin, Yodit Sheido, Peter van Maanen, Carlos Vasquez ແລະ Sanjay Wijesekera (ນິວຢອກ), Kazumi Inden (ເຊລີນລີອອນ) ແລະ Abdulai Kaikai (ສີລັງກາ), UNICEF; ແລະ Bella Monse (ຟີລິບປິນ), Habib Benzian (ທີ່ປຶກສາ) ແລະ Alexander Schratz (ເຢຍລະມັນ), GIZ.

---

UNICEF ປະຕິບັດງານໃນຫຼາຍກວ່າ 190 ປະເທດ ແລະ ອານາເຂດຕ່າງໆ ເພື່ອຊ່ວຍໃຫ້ເດັກຢູ່ລອດ ແລະ ຈະເລີນເຕີບໂຕ, ນັບແຕ່ຍັງເຍົາວ ຈົນເຖິງໄວໜຸ່ມ. ອົງການ UNICEF ໄດ້ຮັບທຶນຮອນຈາກການປະກອບສ່ວນແບບສະໝັກໃຈຂອງສ່ວນບຸກຄົນ, ທຸລະກິດ, ມູນນິທິ ແລະ ລັດຖະບານຕ່າງໆ.

GIZ ຈັດຕັ້ງແຜນງານ ແລະ ໂຄງການຕ່າງໆ ສໍາລັບການພັດທະນາແບບຍືນຍົງ ໃນນາມຕາງໜ້າຂອງ ກະຊວງເພື່ອຄວາມຮ່ວມມືທາງເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນສາທາລະນະລັດ ເຢຍລະມັນ (BMZ).

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH | unicef

ສິງຫາ 2013

UNICEF
*Programme Division/WASH*
*3 United Nations Plaza New York, NY 10017 USA www.unicef.org/wash/schools*

*ຂໍ້ຄິດເຫັນ ນໍາສະເໜີມຸມມອງສ່ວນບຸກຄົນຂອງຜູ້ຂຽນ ແລະ ບໍ່ໄດ້ໝາຍເຖິງວ່າ ຈະຕ້ອງສະທ້ອນໃຫ້ເຫັນເຖິງຈຸດຢືນຂອງອົງການກອງທຶນເພື່ອເດັກແຫ່ງສະຫະປະຊາຊາດ (UNICEF) ຫຼື ອົງກອນຄວາມຮ່ວມມືລະຫວ່າງປະເທດ (GIZ) GmbH. ການກໍານົດທີ່ຕັ້ງຕ່າງໆ ທີ່ໃຊ້ໃນເອກະສານສະບັບນີ້ ແລະ ການນໍາສະເໜີຂໍ້ມູນຕ່າງໆ ບໍ່ໄດ້ໝາຍຄວາມໃນສ່ວນໃດໜຶ່ງຂອງການສະແດງຄໍາຄິດເຫັນໃດໆຂອງອົງການ UNICEF ທີ່ກ່ຽວກັບສະຖານະທາງກົດໝາຍຂອງປະເທດ ຫຼື ເຂດແດນ ຫຼື ໜ່ວຍງານ ຫຼື ການກໍານົດເຂດພົມແດນໃດໆ.*

ສໍາລັບຂໍ້ມູນເພີ່ມເຕີມ ກ່ຽວກັບ ຫຼັກການສາມດາວ ເພື່ອສ້າງແຜນງານ WASH ໃນໂຮງຮຽນ, ກະລຸນາຕິດຕໍ່ພົວພັນ Murat Sahin, msahin@unicef.org, ຫຼື Bella Monse, bella.monse@giz.de.

# ຫຼັກການສາມດາວ:

## ສຳລັບ WASH ໃນໂຮງຮຽນ



## ສາລະບານ


ບົດສະແດງຄວາມຂອບໃຈ ........ ດ້ານໃນຂອງໜ້າປົກ

ບົດສັງລວມ ........ 2

1.0 ສະພາບລວມ ........ 3

2.0 ຫຼັກການສາມດາວ ສຳລັບ WASH ໃນໂຮງຮຽນ ........ 5

2.1 ໂຮງຮຽນດາວດຽວ ........ 6
- ສຸຂະອະນາໄມ ........ 7
- ສຸຂະພິບານ ........ 8
- ນ້ຳດື່ມ ........ 8
- ໂຮງຮຽນທີ່ຕັ້ງໜ້າ ........ 10
- ການສະໜັບສະໜູນຂອງຊຸມຊົນ ........ 11

2.2 ໂຮງຮຽນສອງດາວ ........ 12
- ການລ້າງມື ........ 13
- ຫ້ອງນ້ຳ ແລະ ການຈັດການສຸຂະອະນາໄມເວລາມີປະຈຳເດືອນ ........ 13
- ນ້ຳດື່ມທີ່ປອດໄພ ........ 14

2.3 ໂຮງຮຽນສາມດາວ ........ 15

3.0 ການຄຸ້ມຄອງຫຼັກການສາມດາວ ........ 17

3.1 ບົດບາດຂອງລັດຖະບານ ແລະ ຄູ່ຮ່ວມງານພາຍນອກທີ່ໃຫ້ການສະໜັບສະໜູນ ........ 17

3.2 ການຕິດຕາມ ແລະ ການຢັ້ງຢືນຂອງໂຮງຮຽນ ........ 18
- ການຮັບຮູ້ ແລະ ການໃຫ້ລາງວັນຕໍ່ຜົນງານ ........ 18

3.3 ຄວາມສາມາດປັບປ່ຽນໄດ້ ແລະ ຄວາມແຕກຕ່າງ ........ 19

4.0 ພາກສະຫຼຸບ ........ 21

**ເອກະສານຊ້ອນທ້າຍ I.** ຫຼັກຖານທີ່ເຊື່ອມໂຍງ WASH ໃນໂຮງຮຽນ ກັບສຸຂະພາບ ແລະ ຜົນການຮຽນຂອງນັກຮຽນ ........ 22

**ເອກະສານຊ້ອນທ້າຍ II.** ອັດຕາກຸ້ມກວມທົ່ວໂລກຂອງແຜນງານ WASH ໃນໂຮງຮຽນ ........ 23

**ເອກະສານຊ້ອນທ້າຍ III.** ການວິເຄາະບັນຫາຂອດຄ້າງຄາຂອງແຜນງານ WASH ໃນໂຮງຮຽນ ........ 24

**ເອກະສານອ້າງອີງທ້າຍເຫຼັ້ມ** ........ 26

# ບົດສັງລວມ



ຫຼັກການສາມດາວ ສໍາລັບ WASH ໃນໂຮງຮຽນ ໄດ້ຮັບການອອກແບບ ເພື່ອປັບປຸງປະສິດທິຜົນຂອງແຜນງານການປ່ຽນແປງພຶດຕິກໍາດ້ານສຸຂະອະນາໄມ. ຫຼັກການດັ່ງກ່າວ ຮັບປະກັນວ່າ ອຸປະນິໄສທີ່ຖືກສຸຂະລັກສະນະ ໄດ້ຮັບການສິດສອນ, ຝຶກແອບ ແລະ ເຊື່ອມສານເຂົ້າກັນກັບກິດຈະວັດປະຈໍາວັນໃນໂຮງຮຽນ. ຫຼັກການສາມດາວນີ້ ຊ່ວຍໃຫ້ໂຮງຮຽນ ສາມາດປະຕິບັດໄດ້ຕາມເງື່ອນໄຂທີ່ຈໍາເປັນຕ່າງໆ ເພື່ອສ້າງສະພາບແວດລ້ອມການຮຽນຮູ້ທີ່ຖືກຫຼັກອະນາໄມ ແລະ ເປັນການປົກປ້ອງເດັກນ້ອຍ ເຊິ່ງເປັນສ່ວນໜຶ່ງຂອງແຜນງານລິເລີ່ມຢ່າງກວ້າງຂວາງໃນໂຮງຮຽນທີ່ເປັນມິດຕໍ່ເດັກນ້ອຍ. ຫຼັກການດັ່ງກ່າວ ແມ່ນແນໃສ່ແກ້ໄຂບັນຫາທີ່ເປັນຂອດຄ້າງຄາ ກີດກັ້ນປະສິດທິຜົນ ແລະ ການຂະຫຍາຍ ແຜນງານ ປະຈຸບັນຂອງ WASH ໃນໂຮງຮຽນ.

ໃນຫຼັກການສາມດາວນີ້, ໂຮງຮຽນ ຈະໄດ້ຮັບການສົ່ງເສີມໃຫ້ນໍາໃຊ້ບາດກ້າວທີ່ງ່າຍດາຍ ແລະ ບໍ່ແພງ ທີ່ໄດ້ກໍານົດໄວ້ໃນຄູ່ມືສະບັບນີ້. ບາດກ້າວເຫຼົ່ານີ້ ແມ່ນໄດ້ຖືກອອກແບບມາ ເພື່ອຮັບປະກັນວ່າ ນັກຮຽນທຸກຄົນ ລ້າງມືດ້ວຍສະບູ, ມີນໍ້າດື່ມທີ່ສະອາດ, ແລະ  ໄດ້ຮັບການສະໜອງຫ້ອງນໍ້າສະອາດ ທີ່ແຍກຍິງ-ຊາຍຢູ່ໂຮງຮຽນທຸກໆມື້. ກິດຈະກໍາກຸ່ມໄດ້ຊຸກຍູ້ຫຼັກການນີ້ເພີ່ມເຕີມ, ໂດຍເລີ່ມຈາກກິດຈະກໍາປະຈໍາວັນ, ແນະນໍາໃຫ້ມີການລ້າງມືເປັນກຸ່ມ. ເມື່ອສາມາດປະຕິບັດໄດ້ຕາມມາດຕະຖານຂັ້ນຕໍ່າແລ້ວ, ໂຮງຮຽນສາມາດຫຼຸດພົ້ນອອກຈາກໂຮງຮຽນດາວດຽວ ມາເປັນໂຮງຮຽນສາມດາວໄດ້ ດ້ວຍການຂະຫຍາຍກິດຈະກໍາສົ່ງເສີມສຸຂະອະນາໄມ ແລະ ປັບປຸງໂຄງລ່າງພື້ນຖານ, ໂດຍສະເພາະສໍາລັບນັກຮຽນຍິງ, ແລະ ໃນທີ່ສຸດ ຈະຊ່ວຍໃຫ້ສາມາດບັນລຸມາດຕະຖານແຫ່ງຊາດ ສໍາລັບແຜນງານ WASH ໃນໂຮງຮຽນ.[1]

ຫຼັກການສາມດາວ ພົວພັນເຖິງການປ່ຽນແປງຮູບແບບການຮັບຮູ້ຕໍ່ການວາງແຜນວຽກງານ  WASH ໃນໂຮງຮຽນ ຂອງບັນດາໂຮງຮຽນ, ຊຸມຊົນ, ຜູ້ມີອໍານາດໃນການຕັດສິນໃຈຂອງພາກລັດ ແລະ ໜ່ວຍງານທີ່ໃຫ້ການສະໜັບສະໜູນ. ໂດຍການຈັດລຽງບູລິມະສິດຂອງການປະຕິບັດການທີ່ມີຄວາມຈໍາເປັນທີ່ສຸດໃຫ້ບັນລຸເປົ້າໝາຍທີ່ວາງໄວ້, ຫຼັກການສາມດາວ ຊ່ວຍໃຫ້ໂຮງຮຽນ ສຸມໃສ່ການຕອບສະໜອງຕາມຄວາມຈໍາເປັນຂອງນັກຮຽນ ໂດຍຜ່ານແຜນງານທີ່ສໍາຄັນໆຕ່າງໆ. ໃນຂະນະດຽວກັນ, ມັນຍັງຊ່ວຍວາງແນວທາງທີ່ຊັດເຈນສໍາລັບທຸກໆໂຮງຮຽນໃນທົ່ວປະເທດ ເພື່ອປະຕິບັດໃຫ້ໄດ້ຕາມມາດຕະຖານແຫ່ງຊາດ, ແລະ ສໍາລັບນັກຮຽນທຸກຄົນ ຈະໄດ້ມີໂຮງຮຽນທີ່ສົ່ງເສີມສຸຂະອະນາໄມ ແລະ ສຸຂະພາບດີ. ມັນຊຸກຍູ້ໃຫ້ມີການປະຕິບັດການຂອງທ້ອງຖິ່ນ ແລະ ການສະໜັບສະໜູນຈາກຊຸມຊົນ ແລະ ບໍ່ຈໍາເປັນເອື່ອຍອີງໃສ່ປັດໃຈປະກອບທີ່ມີລາຄາແພງຈາກລະບົບການສຶກສາ ຫຼື ໜ່ວຍງານສະໜັບສະໜູນຈາກພາຍນອກ.‘ເຮັດໃຫ້ມີຄວາມງ່າຍດາຍ, ຜົນຂະຫຍາຍໄດ້ ແລະ ມີຄວາມຍືນຍົງ’ ເປັນແນວທາງຊີ້ນໍາເພື່ອແຊກຊຶມເຂົ້າໃນທຸກໄລຍະ, ເພື່ອເຮັດໃຫ້ຫຼັກການດັ່ງກ່າວສາມາດຂະຫຍາຍໄປໃນທົ່ວປະເທດໄດ້ຢ່າງຍືນຍົງໂດຍມີຄ່າໃຊ້ຈ່າຍທີ່ຕໍ່າ.

# 1.0 ສະພາບລວມ

ເດັກນ້ອຍມີສິດທີ່ຈະມີນໍ້າ ແລະ ສຸຂະພິບານຊົມໃຊ້ ແລະ ມີສຸຂະພາບທີ່ດີ. ສິດທີ່ດັ່ງກ່າວນີ້ ຈໍາເປັນຕ້ອງໄດ້ຮັບການເຕີມເຕັມໃນໂຮງຮຽນ ເຊິ່ງເປັນບ່ອນທີ່ເດັກໃຊ້ເວລາສ່ວນໃຫຍ່ຂອງເຂົາເຈົ້າໃນແຕ່ລະວັນ. ນໍ້າ ແລະ ສຸຂະພິບານທີ່ພຽງພໍ ເປັນສ່ວນໜຶ່ງຂອງສະພາບແວດລ້ອມຂອງໂຮງຮຽນທີ່ດີຕໍ່ສຸຂະພາບ ເຊິ່ງມີຄວາມສໍາຄັນໃນການປັບປຸງໂອກາດໃນການພັດທະນາ ແລະ ການຈະເລີນເຕີບໂຕຂອງເດັກ. ການສົ່ງເສີມພຶດຕິກໍາທີ່ຖືກສຸຂະລັກສະນະຢູ່ໂຮງຮຽນ ສາມາດຊ່ວຍໃຫ້ມີການລິເລີ່ມ ປ່ຽນແປງພຶດຕິກໍາທີ່ຈະຄົງຢູ່ຕໍ່ໄປຕະຫຼອດຊີວິດຂອງເຂົາເຈົ້າໄດ້.

ຫຼັກການສາມດາວ ສໍາລັບ WASH ຢູ່ໂຮງຮຽນ ໄດ້ຮັບການອອກແບບ ເພື່ອຄວາມຄືບໜ້າຂອງປະສິດທິຜົນຂອງແຜນງານການປ່ຽນແປງພຶດຕິກໍາທີ່ຖືກສຸຂະອະນາໄມ, ໃນຂະນະດຽວກັນກໍ່ຮັບປະກັນວ່າ ໂຮງຮຽນປະຕິບັດໄດ້ຕາມເງື່ອນໄຂທີ່ຈໍາເປັນເພື່ອສະໜອງສະພາບແວດລ້ອມໃນການຮຽນຮູ້ທີ່ດີສໍາລັບເດັກ. ຫຼັກການດັ່ງກ່າວ ໄດ້ຮັບການພັດທະນາ ເພື່ອຕອບສະໜອງກັບການວິເຄາະບັນຫາທີ່ເປັນຂອດຄ້າງຄາຂອງແຜນງານ WASH ໃນໂຮງຮຽນໃນທົ່ວໂລກ ແລະ ເປັນຕົວແບບຂອງແຜນງານທີ່ໄດ້ຮັບຜົນສໍາເລັດ ເຊັ່ນ: ໂຄງການສຸຂະພາບດີໃນໂຮງຮຽນ (Fit for School) ໂດຍໄດ້ຮັບການສະໜັບສະໜູນໂດຍ GIZ.

ໃນຫຼັກການສາມດາວນີ້, ໂຮງຮຽນ ໄດ້ຮັບການສົ່ງເສີມໃຫ້ນໍາໃຊ້ບາດກ້າວທີ່ງ່າຍດາຍ ເພື່ອໃຫ້ແນ່ໃຈວ່າ ນັກຮຽນທຸກຄົນ ລ້າງມືດ້ວຍສະບູ, ສາມາດເຂົ້າເຖິງນໍ້າດື່ມທີ່ສະອາດ, ແລະ ໄດ້ຮັບການສະໜອງຫ້ອງນໍ້າສະອາດທີ່ແຍກກັນລະວ່າງຍິງ-ຊາຍ ໃນໂຮງຮຽນ ແລະ ຫ້ອງນໍ້າທີ່ເປັນມິດຕໍ່ເດັກ ໃນທຸກໆວັນ.

ການນໍາພາໃຫ້ມີກິດຈະກໍາລ້າງມືພ້ອມກັນທຸກໆມື້ ຖືເປັນອົງປະກອບສໍາຄັນຂອງຫຼັກການສາມດາວ. ໃນໄລຍະກິດຈະກໍາກຸ່ມນີ້, ນັກຮຽນທຸກຄົນທີ່ແບ່ງເປັນກຸ່ມ ຕ້ອງລ້າງມືດ້ວຍສະບູຢ່າງໜ້ອຍວັນລະຄັ້ງ, ກ່ອນຮັບປະທານອາຫານ ຫຼື ໃນເວລາພັກກິນອາຫານວ່າງ. ກິດຈະກໍາກຸ່ມໃນໂຮງຮຽນ ໄດ້ຮັບການອອກແບບເພື່ອສົ່ງເສີມພຶດຕິກໍາທີ່ຖືກສຸຂະລັກສະນະ, ແລະ ນໍາໃຊ້ພະລັງບວກຂອງມາດຖານທາງສັງຄົມ ແລະ ການຊຸກຍູ້ເຊິ່ງກັນແລະກັນຂອງກຸ່ມນັກຮຽນ ເພື່ອສົ່ງເສີມການປະຕິບັດທີ່ເປັນຜົນດີຕໍ່ສຸຂະພາບ.

ອົງປະກອບດ້ານສຸຂະພິບານ ແລະ ນໍ້າ ຂອງຫຼັກການສາມດາວ ຍັງຖືເປັນໃຈກາງຂອງກິດຈະກໍາຂອງກຸ່ມໃນແຕ່ລະວັນ. ສໍາລັບສຸຂະພິບານ, ຈຸດສຸມແມ່ນແນໃສ່ການຮັກສາຫ້ອງນໍ້າທີ່ມີຢູ່ນັ້ນໃຫ້ສະອາດ ໂດຍຜ່ານກິດຈະວັດປະຈໍາວັນ. ສໍາລັບນໍ້າ, ຄູຈະເປັນຜູ້ກໍານົດໃຫ້ວ່າ ເດັກນ້ອຍແຕ່ລະຄົນຕ້ອງມີຂວດນໍ້າດື່ມຂອງຕົນເອງ, ຫຼື ອຸປະກອນໃສ່ນໍ້າດື່ມ, ທີ່ໃຊ້ໄວ້ໃສ່ນໍ້າມາຈາກເຮືອນຂອງຕົນ ແລະ ນໍາມາດື່ມຢູ່ໂຮງຮຽນ, ຫຼື ໃສ່ນໍ້າມາຈາກແຫຼ່ງນໍ້າທີ່ປອດໄພໃນໂຮງຮຽນ.

ພື້ນຖານສໍາຄັນທີ່ຢູ່ເບື້ອງຫຼັງຫຼັກການດັ່ງກ່າວນີ້ ແມ່ນໂຄງລ່າງພື້ນຖານໃນໂຮງຮຽນດ້ານນໍ້າ, ສຸຂະອະນາໄມ ແລະ ຄວາມສະອາດ (WASH) ທີ່ມີລາຄາແພງນັ້ນ ບໍ່ໄດ້ໝາຍຄວາມວ່າ ຈະສາມາດຕອບສະໜອງໄດ້ຕາມເປົ້າໝາຍດ້ານສຸຂະພາບທີ່ດີສະເໝີໄປ. ໃນຫຼາຍໆໂຮງຮຽນ ທີ່ມີສິ່ງອໍານວຍຄວາມສະດວກພື້ນຖານແລ້ວ, ການປັບປຸງໂຄງລ່າງພື້ນຖານ ຈະຮຽກຮ້ອງໃຫ້ມີການລົງທຶນຂັ້ນຕໍ່າ ແລະ ປະກອບມີການກໍ່ສ້າງບ່ອນລ້າງມືເປັນກຸ່ມທີ່ມີລາຄາຕໍ່າ. ໃນບາງໂຮງຮຽນ, ມີການລົງທຶນເພີ່ມເຕີມ ແຕ່ກໍ່ຖືວ່າປະຢັດທີ່ສຸດ ທີ່ຈະນໍາໃຊ້ເພື່ອການກໍ່ສ້າງ ຫຼື ປັບແປງຫ້ອງນໍ້າໃນງົບປະມານທີ່ຕໍ່າ. ໃນທຸກໆກໍລະນີ, ການລົງທຶນໃສ່ໂຄງລ່າງ ຈະຖືກຈໍາກັດໃສ່ສິ່ງອໍານວຍຄວາມສະດວກ ແລະ ວັດສະດຸຕ່າງໆ ເຊັ່ນ: ສະບູ ເຊິ່ງຖືວ່າຈໍາເປັນເພື່ອສົ່ງເສີມ ແລະ ສະໜັບສະໜູນໃຫ້ມີການປ່ຽນແປງພຶດຕິກໍາ.

ເມື່ອສາມາດບັນລຸມາດຕະຖານຂັ້ນຕໍ່າໄດ້ແລ້ວ, ໂຮງຮຽນ ສາມາດຫຼຸດພົ້ນອອກຈາກໜຶ່ງດາວ ມາເປັນ ສາມດາວ ໂດຍການຂະຫຍາຍກິດຈະກໍາສົ່ງເສີມສຸຂະອະນາໄມ ແລະ ປັບປຸງໂຄງລ່າງພື້ນຖານ, ໂດຍສະເພາະສໍາລັບເດັກຍິງ, ເຊິ່ງໃນທີ່ສຸດ ຈະຊ່ວຍໃຫ້ສາມາດບັນລຸໄດ້ຕາມມາດຕະຖານແຫ່ງຊາດ ສໍາລັບ WASH ໃນໂຮງຮຽນ.[2]

ເຮັດໃຫ້ມີຄວາມງ່າຍດາຍ, ສາມາດຜັນຂະຫຍາຍໄດ້ ແລະ ມີຄວາມຍືນຍົງ ແມ່ນຫຼັກການຊີ້ນໍາ ເພື່ອແຊກຊຶມເຂົ້າໃນແຕ່ລະໄລຍະຂອງຂະບວນການ, ດັ່ງນັ້ນຈິ່ງເຮັດໃຫ້ຫຼັກການດັ່ງກ່າວ ມີລາຄາບໍ່ແພງ ແລະ ສາມາດຂະຫຍາຍອອກໄປທົ່ວປະເທດໄດ້. ໂດຍການເນັ້ນໜັກໃສ່ການປະຕິບັດການທີ່ຈໍາເປັນທີ່ສຸດ ເພື່ອບັນລຸເປົ້າໝາຍທີ່ວາງໄວ້, ຫຼັກການສາມດາວ ຈະຊ່ວຍໃຫ້ໂຮງຮຽນ ມີປະສິດທິຜົນເພີ່ມຂຶ້ນ ໃນການສ້າງສະພາບແວດລ້ອມທີ່ດີຕໍ່ສຸຂະພາບຂອງເດັກ ແລະ ສົ່ງເສີມພຶດຕິກໍາທີ່ດີຖືກສຸຂະອະນາໄມ.

# ຄຸນລັກສະນະຂອງ ຫຼັກການ ສາມດາວ

### ໂຮງຮຽນໜຶ່ງດາວ

*ກິດຈະກຳປະຈຳວັນ ເພື່ອສົ່ງເສີມພຶດຕິກຳທີ່ດີຕໍ່ສຸຂະພາບ*

- ມີການນຳພາການລ້າງມືເປັນກຸ່ມດ້ວຍສະບູ, ໂດຍທົ່ວໄປກ່ອນກິນອາຫານຢູ່ໂຮງຮຽນ
- ມີການນຳພາການອະນາໄມຫ້ອງນ້ຳ, ແລະ ສະໜອງສະບູ ແລະ ນ້ຳ (ຢ່າງໜ້ອຍ ຕ້ອງມີຫ້ອງນ້ຳຫ້ອງໜຶ່ງທີ່ສາມາດໃຊ້ງານໄດ້ ສຳລັບເດັກຍິງ ແລະ ຫ້ອງນ້ຳຫ້ອງໜຶ່ງສຳລັບເດັກຊາຍ); ບໍ່ມີການຖ່າຍຊະຊາຍ
- ມີການນຳພາການນຳໃຊ້ຕູກນ້ຳດື່ມໂດຍນັກຮຽນທຸກຄົນ

### ໂຮງຮຽນສອງດາວ

*ການປັບປຸງເພີ່ມເຕີມ*

- ສຸຂະສຶກສາ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອສົ່ງເສີມການລ້າງມືພາຍຫຼັງໃຊ້ຫ້ອງນ້ຳ
- ສິ່ງອຳນວຍຄວາມສະດວກດ້ານສຸຂະພິບານທີ່ໄດ້ຮັບການປັບປຸງ ແລະ ການສຶກສາເພື່ອການຈັດການດ້ານສຸຂະອະນາໄມປະຈຳເດືອນ
- ຈຸດທີ່ໃຊ້ບຳບັດນ້ຳທີ່ມີລາຄາຕໍ່າ ໄດ້ຮັບການແນະນຳໃຫ້ນຳໃຊ້ໃນໂຮງຮຽນ

### ໂຮງຮຽນສາມດາວ

ປະຕິບັດໄດ້ຕາມມາດຕະຖານແຫ່ງຊາດ

- ສິ່ງອຳນວຍຄວາມສະດວກ ແລະ ລະບົບຕ່າງໆ ໃນໂຮງຮຽນ ໄດ້ຮັບການປັບປຸງ ເພື່ອໃຫ້ໄດ້ຕາມມາດຕະຖານແຫ່ງຊາດ

### ‘ໂຮງຮຽນບໍ່ມີດາວ’

*ສະພາບການທີ່ເປັນຢູ່ຂອງຫຼາຍໆໂຮງຮຽນ*

- ມີຂໍ້ກຳນົດ ຫຼື ບໍ່ມີການສົ່ງເສີມສຸຂະອະນາໄມ
- ອາດຈະມີ ຫຼື ບໍ່ມີໂຄງລ່າງພື້ນຖານຂອງ WASH

## 2.0 ຫຼັກການສາມດາວ ສຳລັບ WASH ຢູ່ໂຮງຮຽນ



ຫຼັກການສາມດາວ ປະກອບມີສອງໄລຍະທີ່ສຳຄັນ: ໄລຍະທຳອິດ ແລະ ມີຄວາມສຳຄັນຢ່າງຍິ່ງ ແມ່ນເມື່ອໂຮງຮຽນ ໃຫ້ຄຳໝັ້ນສັນຍາຕໍ່ຫຼັກການໂດຍລວມ ແລະ ເລີ່ມສ້າງການປ່ຽນແປງທີ່ຈຳເປັນຕ່າງໆ ເພື່ອໃຫ້ມີຄວາມຄືບໜ້າໂດຍການປ່ຽນແປງຈາກການເປັນ 'ໂຮງຮຽນບໍ່ມີດາວ' ມາເປັນ ໂຮງຮຽນໜຶ່ງດາວ ທີ່ສາມາດປະຕິບັດໄດ້ຕາມມາດຕະຖານຂັ້ນຕ່ຳສຸດສຳລັບໂຮງຮຽນທີ່ສົ່ງເສີມສຸຂະອະນາໄມ ແລະ ສຸຂະພາບທີ່ດີ.

'ໂຮງຮຽນບໍ່ມີດາວ' ແມ່ນວິທີການບັນລະຍາຍເຖິງຫຼາຍໆໂຮງຮຽນໃນບັນດາປະເທດທີ່ກຳລັງພັດທະນາ, ໂດຍສະເພາະໂຮງຮຽນທີ່ບໍ່ມີສິ່ງອຳນວຍຄວາມສະດວກຕ່າງໆ ໃນການສະໜອງນ້ຳ, ສຸຂະອະນາໄມ ແລະ ຄວາມສະອາດ (WASH) ຫຼື ບໍ່ມີແຜນງານດ້ານສຸຂະອະນາໄມເປັນປົກກະຕິ. ໂຮງຮຽນທີ່ຈັດໃນປະເພດນີ້ ລວມເອົາບັນດາໂຮງຮຽນທີ່ມີໂຄງລ່າງພື້ນຖານບາງສ່ວນ, ບາງທີອາດຈະມີລະບົບນ້ຳ ແລະ ສຸຂະພິບານທີ່ມີລາຄາແພງ, ແຕ່ວ່າ ບໍ່ມີແຜນງານທີ່ມີປະສິດທິຜົນ ເພື່ອປັບປຸງພຶດຕິກຳດ້ານສຸຂະອະນາໄມ ຫຼື ການຮັກສາໂຄງລ່າງພື້ນຖານທີ່ມີຢູ່ນັ້ນໃຫ້ສາມາດໃຊ້ງານໄດ້. ໂຮງຮຽນເຫຼົ່ານີ້ ອາດຈະບໍ່ໄດ້ຮັບ ຫຼື ໄດ້ຮັບການສະໜັບສະໜູນຈາກຊຸມຊົນເຈົ້າພາບເລັກນ້ອຍ ໃນຂົງເຂດວຽກງານ WASH.

ການຫຼຸດພົ້ນອອກຈາກລະດັບ 'ບໍ່ມີດາວ' ມາເປັນ ໂຮງຮຽນໜຶ່ງດາວ ໄດ້ຮັບການອອກແບບເພື່ອຮຽກຮ້ອງໃຫ້ມີການລົງທຶນດ້ານການເງິນໃນລະດັບໜ້ອຍທີ່ສຸດ. ແຕ່ວ່າ ການເຮັດໃຫ້ຫຼຸດພົ້ນດັ່ງກ່າວ ຖືເປັນບາດກ້າວທີ່ຍິ່ງໃຫຍ່ ເພາະວ່າມັນພົວພັນເຖິງການປ່ຽນແປງຮູບແບບການຮັບຮູ້ຕໍ່ການວາງແຜນວຽກງານ WASH ໃນໂຮງຮຽນ ຂອງບັນດາໂຮງຮຽນ, ຊຸມຊົນ, ຜູ້ມີອຳນາດໃນການຕັດສິນໃຈຂອງພາກລັດ ແລະ ໜ່ວຍງານທີ່ສະໜັບສະໜູນ.

ພາຍຫຼັງທີ່ໂຮງຮຽນນຳເອົາຫຼັກການເຂົ້າມາເປັນສ່ວນໜຶ່ງ ແລະ ບັນລຸສະຖານະເປັນໂຮງຮຽນໜຶ່ງດາວ, ມັນມີຄວາມເປັນໄປໄດ້ທີ່ຈະສາມາດທັນປ່ຽນໄປສູ່ສະຖານະທີ່ເປັນໂຮງຮຽນສາມດາວໄດ້. ມີຫຼາຍໆໂຮງຮຽນ ຈະສາມາດບັນລຸສະຖານະເປັນໂຮງຮຽນໜຶ່ງດາວດ້ວຍຊັບພະຍາກອນທີ່ມີຢູ່ຂອງເຂົາເຈົ້າເອງ ແລະ ການສະໜັບສະໜູນຈາກຊຸມຊົນຂອງເຂົາເຈົ້າ.

ການປະຕິບັດໃຫ້ໄດ້ອີກລະດັບໜຶ່ງ ອາດຈະຮຽກຮ້ອງໃຫ້ມີການສະໜັບສະໜູນຈາກພາຍນອກ ແລະ ຕ້ອງມີຄວາມມຸ້ງໝັ້ນສູງກວ່າຈາກຊຸມຊົນ ແລະ ຂະແໜງສຶກສາ.

ຫຼາຍໂຮງຮຽນສາມາດບັນລຸສະຖານະເປັນໂຮງຮຽນສອງດາວ ດ້ວຍການສ້າງການປ່ຽນແປງເພີ່ມເຕີມໃນແຜນງານສຸຂະສຶກສາ ແລະ ການປັບປຸງລະບົບສິ່ງອຳນວຍຄວາມສະດວກ WASH ພຽງເລັກນ້ອຍ. ການປ່ຽນແປງເຫຼົ່ານີ້ ແມ່ນຖືກອອກແບບມາເພື່ອອຳນວຍຄວາມສະດວກໃນພາກປະຕິບັດຕົວຈິງຂອງການລ້າງມືດ້ວຍສະບູພາຍຫຼັງນຳໃຊ້ຫ້ອງນ້ຳ, ເພີ່ມເຕີມຈາກການລ້າງມືກ່ອນຮັບປະທານອາຫານ, ແລະ ເພື່ອປັບປຸງຂີດຄວາມສາມາດຂອງໂຮງຮຽນ ໃນການປະຕິບັດໃຫ້ໄດ້ຕາມຄວາມຈຳເປັນຂອງເດັກຍິງ ດ້ວຍການເພີ່ມຈຳນວນຫ້ອງນ້ຳ ແລະ/ຫຼື ປັບປຸງຄວາມເປັນສ່ວນຕົວ ແລະ ຄວາມສາມາດໃນການໃຊ້ງານໄດ້ຂອງຫ້ອງນ້ຳທີ່ມີຢູ່.

ໂຮງຮຽນສອງດາວ ຍັງແນະນຳໃຫ້ມີການຈັດການສຸຂະອະນາໄມໃນເວລາມີປະຈຳເດືອນ. ການປັບປຸງເຫຼົ່ານີ້ ອາດຈະລວມທັງພາກການສຶກສາສະເພາະ; ການຮັບປະກັນໃຫ້ມີຜ້າອະນາໄມໄວ້ໃຫ້ເດັກຍິງນຳໃຊ້ໃນເວລາສຸກເສີນ; ແລະ ການອອກແບບຫ້ອງນ້ຳທີ່ໄດ້ຮັບການປັບປຸງ ເພື່ອຮັບປະກັນຄວາມເປັນສ່ວນຕົວ, ຊ່ວຍໃຫ້ເດັກຍິງຊັກຜ້າທີ່ສາມາດນຳມາໃຊ້ຄືນໄດ້ ຫຼື ເສື້ອຜ້າທີ່ຖືກຄາບເລືອດ, ແລະ ສະໜອງສິ່ງອຳນວຍຄວາມສະດວກສຳລັບຖິ້ມຜ້າອະນາໄມໃນສະຖານທີ່ເໝາະສົມ.

ໂຮງຮຽນ ສາມາດທັນປ່ຽນໄປສູ່ສະຖານະເປັນໂຮງຮຽນສາມດາວໄດ້ ດ້ວຍການປັບປຸງຕ່າງໆທີ່ຈຳເປັນ ເພື່ອໃຫ້ໄດ້ຕາມມາດຕະຖານແຫ່ງຊາດສຳລັບ WASH ໃນໂຮງຮຽນ, ເຊິ່ງຊ່ວຍໃຫ້ຮັບປະກັນຄວາມເທົ່າທຽມໃນການເຂົ້າເຖິງໄດ້ໃນທົ່ວປະເທດ. ຫຼັກການເພີ່ມເຕີມເພື່ອປັບປຸງແຜນງານ WASH ໃນໂຮງຮຽນນີ້ ແມ່ນສອດຄ່ອງກັບວິທີການພັດທະນາໃນປະຈຸບັນ ກ່ຽວກັບຄວາມຄືບໜ້າໃນການບັນລຸໃຫ້ໄດ້ຕາມສິດທິ.[3] ມັນຍັງເປັນການປະຕິບັດຕາມຄຳແນະນຳສາກົນທີ່ໄດ້ກຳນົດໄວ້ໃນ 'ນ້ຳ ສຸຂະອະນາໄມ ແລະ ມາດຕະຖານດ້ານຄວາມສະອາດສຳລັບໂຮງຮຽນ ໃນຮູບແບບທີ່ມີຄ່າໃຊ້ຈ່າຍຕ່ຳ'.[4]

## 2.1 ໂຮງຮຽນໜຶ່ງດາວ

ໂຮງຮຽນໜຶ່ງດາວ ສາມາດປະຕິບັດໄດ້ສາມເງື່ອນໄຂ, ໜຶ່ງໃນແຕ່ລະຂໍ້ກ່ຽວກັບສຸຂະອະນາໄມ, ສຸຂະພິບານ ແລະ ນ້ຳດື່ມສະອາດ:

1. ເດັກນ້ອຍທຸກຄົນ ເຂົ້າຮ່ວມໃນກິດຈະກຳການລ້າງມືດ້ວຍສະບູທີ່ຈັດເປັນກຸ່ມຢ່າງມີການຕິດຕາມ ໂດຍຫຼັກການແລ້ວແມ່ນກ່ອນຮັບປະທານອາຫານກາງເວັນຢູ່ໂຮງຮຽນ.

2. ໂຮງຮຽນ ມີຫ້ອງນ້ຳທີ່ແຍກຍິງ-ຊາຍ ທີ່ສາມາດໃຊ້ງານໄດ້, ມີຄວາມສະອາດ ແລະ ຖືກນຳໃຊ້ໂດຍນັກຮຽນໝົດທຸກຄົນ (ບໍ່ມີການຖ່າຍຊະຊາຍ).

3. ເດັກທຸກຄົນມີ ຂວດນ້ຳດື່ມສ່ວນຕົວ ແລະ ນຳໃຊ້ຢ່າງຖືກຕ້ອງ.

ຂີດໝາຍເຫຼົ່ານີ້ຈະສາມາດບັນລຸໄດ້ແນວໃດນັ້ນ ອາດຈະແຕກຕ່າງກັນໃນແຕ່ລະໂຮງຮຽນ, ຂຶ້ນກັບສິ່ງອຳນວຍຄວາມສະດວກທີ່ມີຢູ່ເດີມ ແລະ ວິທີການຕົວຈິງທີ່ໄດ້ນຳໃຊ້ເພື່ອຈັດຕັ້ງປະຕິບັດຫຼັກການດັ່ງກ່າວນີ້. ໃນທຸກໆກໍລະນີ, ສິ່ງສຳຄັນທີ່ຈະຫັນປ່ຽນມາເປັນໂຮງຮຽນໜຶ່ງດາວ - ແລະ ສາລະສຳຄັນຂອງຫຼັກການສາມດາວ - ແມ່ນຮູບແບບພຶດຕິກຳທີ່ປະຕິບັດເປັນປະຈຳໃນການຊີ້ນຳກິດຈະກຳກຸ່ມດ້ານສຸຂະອະນາໄມ, ສຸຂະພິບານ ແລະ ນ້ຳດື່ມ. ດ້ວຍການເຂົ້າຮ່ວມກິດຈະກຳປະຈຳວັນເຫຼົ່ານີ້, ເດັກ ຈະກາຍເປັນຜູ້ມີສ່ວນຮ່ວມຢ່າງແທ້ຈິງໃນຂັ້ນຕອນດັ່ງກ່າວ ໃນຂະນະທີ່ຊ່ວຍພັດທະນາໃຫ້ກາຍເປັນນິໄສທີ່ຕິດໂຕໄປຕະຫຼອດຊີວິດ. ດ້ວຍການນຳພາສ້າງກິດຈະກຳຕ່າງໆເຫຼົ່ານີ້ , ໂຮງຮຽນສາມາດປັບປຸງສະພາບແວດລ້ອມໃນການຮຽນຮູ້ໄດ້ຢ່າງຫຼວງຫຼາຍ ໂດຍບໍ່ຈຳເປັນຕ້ອງເອື່ອຍອີງໃສ່ຊັບພະຍາກອນຈາກພາຍນອກຊຸມຊົນຂອງຕົນ.



### ໂຮງຮຽນໜຶ່ງດາວ

*ກິດຈະວັດປະຈຳວັນ ເພື່ອສົ່ງເສີມພຶດຕິກຳທີ່ຖືກຫຼັກອະນາໄມ*

| ກິດຈະກຳ (Interventions) | ຜົນຮັບ |
|---|---|
| **ການນຳພາກິດຈະກຳລ້າງມືເປັນກຸ່ມດ້ວຍສະບູ, ໂດຍຫຼັກການແລ້ວແມ່ນກ່ອນຮັບປະທານອາຫານຢູ່ໂຮງຮຽນ** | • ການລ້າງມືດ້ວຍສະບູ ຈົນກາຍເປັນນິໄສ.<br>• ຄວາມຈຳເປັນທີ່ຕ້ອງລ້າງມືດ້ວຍສະບູ ກ່ອນກິນອາຫານ ໄດ້ຮັບການສົ່ງເສີມ.<br>• ເດັກ ມັກກິດຈະກຳປະຈຳວັນ ແລະ ຮຽນຮູ້ເຕັກນິກການລ້າງມືທີ່ຖືກຕ້ອງ.<br>• ການຈັດການລ້າງມືເປັນກຸ່ມ ຊ່ວຍໃຫ້ສາມາດກຳນົດເວລາເໝາະສົມ ໃນການສົ່ງຂໍ້ຄວາມກ່ຽວກັບສຸຂະອະນາໄມ ແລະ ຄວາມສະອາດ. |
| **ການນຳພາກິດຈະກຳປະຈຳວັນເພື່ອອະນາໄມ ແລະ ການຈັດຕຽມ (ສະບູ ແລະ ນ້ຳ) ຫ້ອງນ້ຳ** | • ຫ້ອງນ້ຳ ໄດ້ຖືກນຳໃຊ້ ຍ້ອນວ່າມັນສະອາດດີ.<br>• ນ້ຳ ແລະ ສະບູ ແມ່ນມີຢູ່ໃນຫ້ອງນ້ຳ.<br>• ການຖ່າຍຊະຊາຍ ຢູ່ໃນ ແລະ ໃກ້ກັບໂຮງຮຽນ ແມ່ນຖືກກຳຈັດຢ່າງສິ້ນເຊີງ.<br>• ເດັກຮຽນຮູ້ເຖິງຄວາມສຳຄັນຂອງຄວາມສະອາດ ໂດຍການມີສ່ວນຮ່ວມຢ່າງຕັ້ງໜ້າ. |
| **ການຊີ້ນຳໃຫ້ນັກຮຽນທຸກຄົນນຳໃຊ້ຂວດນ້ຳດື່ມຂອງຕົນ** | • ນັກຮຽນທຸກຄົນມີນ້ຳດື່ມ ບໍ່ວ່າຈະມີແຫຼ່ງນ້ຳດື່ມທີ່ສະອາດ ແລະ ປອດໄພ ສະໜອງໃຫ້ຢູ່ໂຮງຮຽນຫຼືບໍ່ກໍ່ຕາມ. |

## ສຸຂະອະນາໄມ

ຈັດຕັ້ງກິດຈະກຳການລ້າງມືເປັນກຸ່ມດ້ວຍສະບູ ຢ່າງໜ້ອຍມື້ລະເທື່ອ ແລະ ໄດ້ຮັບການຊີ້ນຳໆພາໂດຍຄູ ເຊິ່ງຈະເປັນຜູ້ເນັ້ນໃຫ້ນັກຮຽນຮູ້ເຖິງເຕັກນິກການລ້າງມືທີ່ດີ ແລະ ຖືກຕ້ອງ. ນັກຮຽນທີ່ຢູ່ຫ້ອງໃຫຍ່ກວ່າ ຫຼື ສະມາຊິກຂອງສະໂມສອນ WASH ຂອງໂຮງຮຽນ ອາດຈະສາມາດຊ່ວຍຈັດຕັ້ງນຳພາກິດຈະກຳນີ້ໄດ້.

ສະຖານທີ່ບ່ອນລ້າງມືທີ່ສ້າງຂຶ້ນແບບງ່າຍດາຍ - ໃນຫຼາຍໆບ່ອນແມ່ນເປັນລະບົບທີ່ເຈາະໃສ່ທໍ່ນ້ຳທີ່ມີລາຄາບໍ່ແພງ ຄືກັບລະບົບທີ່ໃຊ້ຢູ່ປະເທດຟີລິບປິນ - ໄດ້ຮັບການຕິດຕັ້ງໃສ່ເດີ່ນໂຮງຮຽນ ເພື່ອຈຸດປະສົງດັ່ງກ່າວນີ້ *(ເບິ່ງພາບປະກອບຂ້າງລຸ່ມ ແລະ box 'ໂຄງການສຸຂະພາບດີໃນໂຮງຮຽນ' ຢູ່ໜ້າທີ 16).* ໂຮງຮຽນ ສາມາດປັບປ່ຽນການອອກແບບໃຫ້ເໝາະສົມ ເພື່ອນຳໃຊ້ວັດສະດຸທີ່ມີຢູ່ທ້ອງຖິ່ນ ເຊິ່ງຖືກກັບເງື່ອນໄຂທີ່ສາມາດນຳໃຊ້ໄດ້ດົນນານ, ໃຊ້ງານໄດ້ດີ ແລະ ລາຄາຖືກ. ໃນກໍລະນີທີ່ມີງົບປະມານຈຳກັດຫຼາຍ, ໂຮງຮຽນອາດຈະເລືອກທີ່ຈະຕິດຕັ້ງ ດ້ວຍເທັກໂນໂລຊີທີ່ມີລາຄາບໍ່ແພງ ເຊັ່ນ: ຄຸ ຫຼື ກ໊ອກຈ່າຍນ້ຳໃນປະລິມານນ້ອຍ (tippy taps) ແລະ ອື່ນໆ.

ບ່ອນລ້າງມືເປັນກຸ່ມ ອາດຈະຕັ້ງຢູ່ໃນໃຈກາງເດີ່ນໂຮງຮຽນ, ໃກ້ຫ້ອງນ້ຳ ຫຼື ໃກ້ກັບຈຸດຈ່າຍນ້ຳ ບໍ່ວ່າສະຖານທີ່ຈະຕັ້ງຢູ່ໃສກໍ່ຕາມ, ມັນຄວນຈະມີຊ່ອງວ່າງພຽງພໍສຳລັບນັກຮຽນ 10-15 ຄົນ ທີ່ຈະລ້າງມືພ້ອມກັນ, ແລະ ສິ່ງອຳນວຍຄວາມສະດວກດັ່ງກ່າວ ຄວນຈັດໃຫ້ຮ່ອງລະບາຍນ້ຳທີ່ດີພ້ອມ.

ນ້ຳສຳລັບໃຊ້ລ້າງມື ຄວນຈະໃຊ້ຈາກແຫຼ່ງນ້ຳທີ່ມີຢູ່ເດີມພາຍໃນ ຫຼື ໃກ້ໂຮງຮຽນ. ຖ້າຫາກບໍ່ມີແຫຼ່ງນ້ຳສາມາດນຳໃຊ້ເພື່ອດື່ມໄດ້, ອາດຈະນຳໃຊ້ແຫຼ່ງນ້ຳທີ່ຢູ່ໃກ້ທີ່ສຸດແທນ ເພາະວ່ານ້ຳລ້າງມື ບໍ່ຈຳເປັນຕ້ອງໄດ້ຕາມມາດຕະຖານຄືກັນກັບນ້ຳທີ່ໃຊ້ໄວ້ດື່ມ.[5]

ໃນພາກກິດຈະກຳລ້າງມືປະຈຳວັນ ອາດຈະຈັດຂຶ້ນໃນໄລຍະພັກຜ່ອນທີ່ເໝາະສົມໃນມື້ເຂົ້າໂຮງຮຽນ, ແຕ່ວ່າເວລາທີ່ດີທີ່ສຸດ ແມ່ນກ່ອນອາຫານທ່ຽງ ຫຼື ອາຫານວ່າງ ເພື່ອຊ່ວຍສົ່ງເສີມເຖິງຄວາມສຳຄັນຂອງການລ້າງມືດ້ວຍສະບູກ່ອນຮັບປະທານອາຫານ.

ເວລາເຮັດກິດຈະກຳລ້າງມື ແມ່ນນຳໃຊ້ເພື່ອເປີດໂອກາດໃຫ້ມີການເຜີຍແຜ່ຂໍ້ຄວາມດ້ານສຸຂະອະນາໄມ, ໂດຍສະເພາະແມ່ນຂໍ້ຄວາມກ່ຽວກັບຄວາມສຳຄັນຂອງການລ້າງມືໃນສອງເວລາທີ່ຈຳເປັນ ຄື: ກ່ອນ ແລະ ຫຼັງນຳໃຊ້ຫ້ອງນ້ຳ.



ພາກເຮັດກິດຈະກຳດັ່ງກ່າວ ອາດຈະນຳໃຊ້ເພື່ອສື່ງຕໍ່ຂໍ້ຄວາມກ່ຽວກັບຄວາມສະອາດ, ນໍ້າດື່ມທີ່ສະອາດ-ປອດໄພ, ຂໍ້ຄວາມດ້ານການຮັກສາສຸຂະພາບອື່ນໆ ແລະ ກິດຈະກຳຕ່າງໆ ເຊັ່ນ: ການຖູແຂ້ວ. ເຖິງຢ່າງໃດກໍ່ຕາມ, ສຸຂະສຶກສາ ອາດຈະຖືວ່າເປັນຂໍ້ຄວາມສຳຄັນທີ່ສຸດສະເໝີ.

## ສຸຂະພິບານ

ອົງປະກອບດ້ານສຸຂະພິບານຂອງໂຮງຮຽນໜຶ່ງດາວ ຍັງມີຈຸດສຳຄັນຢູ່ກິດຈະກຳປະຈຳວັນ, ໃນກໍລະນີນີ້ ແມ່ນການທຳຄວາມສະອາດຫ້ອງນໍ້າທຸກມື້ໂດຍນັກຮຽນພາຍໃຕ້ການຊີ້ນຳໆພາຂອງຄູ. ກິດຈະກຳນີ້ ແມ່ນຮັບປະກັນວ່າ ຫ້ອງນໍ້າໄດ້ຮັບການຮັກສາໃຫ້ສະອາດ ພ້ອມທັງມີນັກຮຽນເຂົ້າຮ່ວມໃນຂະບວນການຮັກສາຄວາມສະອາດ. ນັກຮຽນທັງໝົດ ແຕ່ບໍ່ແມ່ນເດັກນັກຮຽນທີ່ມີອາຍຸນ້ອຍທີ່ສຸດ ຈະມີສ່ວນຮ່ວມໃນການອະນາໄມຫ້ອງນໍ້າຢ່າງມີຄວາມຍຸຕິທຳ ແລະ ມີການຈັດຕັ້ງຢ່າງສະເໝີພາກລະວ່າງຍິງຊາຍໃນການຈັດຜຽນອະນາໄມ. ໂຮງຮຽນ ຄວນຮັບປະກັນວ່າ ການອະນາໄມຫ້ອງນໍ້າ ບໍ່ຄວນຖືກນຳມາໃຊ້ເປັນການລົງໂທດ.

ບໍລິເວນອ້ອມຮອບຫ້ອງນໍ້າ ກໍ່ຄວນຮັກສາໃຫ້ສະອາດເຊັ່ນກັນ, ການປະຕິບັດຕົວຈິງທີ່ບໍ່ສົ່ງເສີມໃຫ້ມີການຖ່າຍຊະຊາຍ ແລະ ເປັນການສະໜັບສະໜູນຂໍ້ຄວາມກ່ຽວກັບການກຳຈັດການຖ່າຍຊະຊາຍຢ່າງສິ້ນເຊີງທີ່ໄດ້ສົ່ງຕໍ່ໃຫ້ນັກຮຽນ ໃນເວລາເຮັດກິດຈະກຳລ້າງມືເປັນກຸ່ມໃນແຕ່ລະວັນ. ໃນເວລາອະນາໄມໃນແຕ່ລະວັນ, ຫ້ອງນໍ້າຄວນຈະຈັດໃຫ້ມີສະບູເພື່ອເອົາໄວ້ລ້າງມື ແລະ ມີນໍ້າໄວ້ລ້າງມື, ໃນກໍລະນີທີ່ຕ້ອງໄດ້ຕັກນໍ້າມາແຕ່ບ່ອນອື່ນ.

ການສ້ອມແປງ, ການປັບປຸງ ແລະ (ບາງຄັ້ງ) ການກໍ່ສ້າງໃໝ່ ຈຳເປັນຕ້ອງໄດ້ດຳເນີນໄປໃນໂຮງຮຽນທີ່ບໍ່ມີຫ້ອງນໍ້າທີ່ໃຊ້ງານໄດ້. ໃນທຸກໆກໍລະນີ, ຈຸດສຸມຈະແນໃສ່ການນຳໃຊ້ຊັບພະຍາກອນທີ່ມີຢູ່ທ້ອງຖິ່ນ ໂດຍມີເປົ້າໝາຍວາງໄວ້ວ່າ ຢ່າງໜ້ອຍຕ້ອງມີຫ້ອງນໍ້າໜຶ່ງຫ້ອງທີ່ສາມາດໃຊ້ງານໄດ້ສຳລັບນັກຮຽນຍິງ ແລະ ໜຶ່ງຫ້ອງສຳລັບນັກຮຽນຊາຍໃນແຕ່ລະໂຮງຮຽນ. ເມື່ອເປົ້າໝາຍນີ້ໄດ້ຮັບໝາກຜົນແລ້ວ, ຈຸດສຸມຈະແມ່ນແນໃສ່ການຮັກສາ ແລະ ດູແລຄວາມສະອາດຂອງຫ້ອງນໍ້າທີ່ມີຢູ່ ແທນທີ່ຈະສ້າງຫ້ອງນໍ້າໃໝ່ອີກ. ການເນັ້ນໜັກໃສ່ຄວາມສະອາດຂອງຫ້ອງນໍ້າ ຈະໄດ້ຮັບການສະໜັບສະໜູນໂດຍຜ່ານປະສົບການ ແລະ ຫຼັກຖານທີ່ສະແດງໃຫ້ເຫັນວ່າ ເຖິງແມ່ນຈະມີຫ້ອງນໍ້າຫຼາຍຫ້ອງກໍ່ຕາມ, ແນວໂນ້ມແມ່ນເຫັນວ່ານັກຮຽນມັກໃຊ້ແຕ່ຫ້ອງນໍ້າທີ່ສະອາດເທົ່ານັ້ນ.[6]

ໃນໂຮງຮຽນທີ່ມີພະນັກງານທຳຄວາມສະອາດ, ນັກຮຽນຍັງຄົງມີສ່ວນຮ່ວມດ້ວຍການເຮັດໜ້າທີ່ອະນາໄມບາງສ່ວນ, ພາຍໃຕ້ການຊີ້ນຳໆພາຂອງຄູ.

### ປະສົບການຂອງ UNICEF ກັບການລ້າງມືເປັນກຸ່ມຢູ່ໃນໂຮງຮຽນ

UNICEF ສົ່ງເສີມການລ້າງມືເປັນກຸ່ມໃນໂຮງຮຽນເປັນເວລາຫຼາຍປີມາແລ້ວ, ໂດຍເລີ່ມຕົ້ນຈາກການລິເລີ່ມການເຊື່ອມໂຍງກັບມື້ວັນລ້າງມືໂລກ (GHD). ສ່ວນໜຶ່ງຂອງກິດຈະກຳໃນວັນລ້າງມືໂລກ, ມີເດັກຫຼາຍສິບລ້ານຄົນ ລ້າງມືຂອງເຂົາເຈົ້າດ້ວຍສະບູຢູ່ໂຮງຮຽນ ໃນຫຼາຍປະເທດທົ່ວໂລກ. ໃນປີ 2012, ມີເດັກຫຼາຍກວ່າ 70 ລ້ານຄົນໃນໂຮງຮຽນຫ້າແສນແຫ່ງ ທີ່ເຂົ້າຮ່ວມໃນກິດຈະກຳການລ້າງມືເປັນກຸ່ມ.

ເພື່ອຮັກສາຄຳຂັວນວັນລ້າງມືໂລກ “ຫຼາຍກວ່າພຽງໜຶ່ງມື້ ຫຼື more than just a day,” ການເນັ້ນໜັກແມ່ນຂະຫຍາຍຈາກການເຮັດກິດຈະກຳຄັ້ງໜຶ່ງຕໍ່ປີ ມາເປັນແຜນງານທີ່ຖາວອນ ແລະ ຕໍ່ເນື່ອງ. ໃນບາງປະເທດ, ກິດຈະກຳວັນລ້າງມືໂລກ ອາດຈະເຮັດເປັນເວລາຫຼາຍອາທິດ ຫຼື ຫຼາຍເດືອນ. ໃນບາງປະເທດ, ເນັ້ນໜັກໃສ່ການສົ່ງເສີມການລິເລີ່ມການລ້າງມືເປັນປະຈຳທຸກມື້, ຄ້າຍຄືກັນກັບໂຄງການສຸຂະພາບດີໃນໂຮງຮຽນ (Fit for School) ໃນຫຼາຍໆປະເທດ ແລະ ສອດຄ່ອງກັບຫຼັກການສາມດາວ.

ຕົວຢ່າງເຊັ່ນ ຢູ່ປະເທດເນປານ, ກິດຈະກຳການລ້າງມືເປັນກຸ່ມ ໄດ້ເລີ່ມຕົ້ນປະຕິບັດຢູ່ໃນໂຮງຮຽນ 300 ແຫ່ງ. ຢູ່ປະເທດສີລັງກາ, ການລ້າງມື ໄດ້ຮັບການເຊື່ອມສານເຂົ້າໃນແຜນງານອາຫານທ່ຽງຢູ່ໂຮງຮຽນຂອງລັດຖະບານ, ໂດຍການສະໜັບສະໜູນຈາກອົງການ UNICEF. ຢູ່ ຊີລີນລີອອນ, ອົງການ UNICEF ໄດ້ຈັດຕັ້ງໃຫ້ມີກົນໄກການຕິດຕາມໂດຍເພື່ອນຮ່ວມຂະແໜງການ ເພື່ອຕິດຕາມ ກິດຈະກຳການລ້າງມືເປັນກຸ່ມກ່ອນອາຫານທ່ຽງຢູ່ໂຮງຮຽນ. ແລະ ຢູ່ປະເທດອິນເດຍ, ການເຂົ້າຮ່ວມ ແລະ ໃຫ້ການສະໜັບສະໜູນດ້ານວິຊາການຂອງ ອົງການ UNICEF ແກ່ລັດຖະບານ ໄດ້ເຮັດໃຫ້ມີການຕັດສິນໃຈສ້າງຕັ້ງໃຫ້ມີການລ້າງມື ກ່ອນອາຫານກາງເວັນຢູ່ໂຮງຮຽນຢ່າງກວ້າງຂວາງ ໃນໂຮງຮຽນ 300,000 ຫຼັງ.

*ແຫຼ່ງຂໍ້ມູນ:* ຫ້ອງການ UNICEF ປະຈຳປະເທດຕ່າງໆ.






## ນ້ຳດື່ມ

ເນື່ອງຈາກການມີແຫຼ່ງນ້ຳດື່ມທີ່ປອດໄພ ບໍ່ໄດ້ເປັນເງື່ອນໄຂກຳນົດສຳລັບໂຮງຮຽນ ເພື່ອຈະໄດ້ຮັບການຮັບຮູ້ໃນສະຖານະ ໂຮງຮຽນໜຶ່ງດາວ. ໃນທາງກັບກັນ, ນັກຮຽນສາມາດນຳເອົາຂວດນ້ຳຂອງຕົນເອງ ຫຼື ອຸປະກອນໃສ່ນ້ຳແຕ່ເຮືອນມາກິນຢູ່ໂຮງຮຽນໃນແຕ່ລະມື້. ພໍ່-ແມ່ນັກຮຽນຈະໄດ້ຮັບການແຈ້ງໃຫ້ຊາບວ່າ ເດັກຄວນເອົານ້ຳແຕ່ເຮືອນມາໂຮງຮຽນນຳ, ແລະ ຄູຈະຊີ້ນຳກິດຈະກຳນີ້ໃນໄລຍະຊຸມນຸມກັນ. ຂວດນ້ຳ ຫຼື ອຸປະກອນໃສ່ນ້ຳຍັງສາມາດນຳໃຊ້ໄດ້ໃນກໍລະນີໂຮງຮຽນມີແຫຼ່ງນ້ຳດື່ມທີ່ປອດໄພ ເຊິ່ງຈະຊ່ວຍໃຫ້ຫຼຸດຜ່ອນການແອອັດຢູ່ບ່ອນເອົານ້ຳດື່ມໃນໂຮງຮຽນ ແລະ ເພື່ອຮັບປະກັນວ່າ ເດັກມີນ້ຳດື່ມຕະຫຼອດເວລາ.

ໃນບາງກໍລະນີ, ໂຮງຮຽນອາດຈະສະໜອງຂວດນ້ຳ ຫຼື ອຸປະກອນໃສ່ນ້ຳໃຫ້ແກ່ເດັກ, ແຕ່ວ່າອັນນີ້ໂດຍທົ່ວໄປແມ່ນບໍ່ຈຳເປັນ ເພາະວ່າຂວດນ້ຳ ແມ່ນມີຢູ່ທົ່ວໄປ ແລະ ມີລາຄາບໍ່ແພງໃນທົ່ວຂົງເຂດຂອງໂລກ. ໃນໄລຍະທີ່ຢູ່ຂັ້ນ ໂຮງຮຽນໜຶ່ງດາວ, ຖ້າການເຂົ້າເຖິງແຫຼ່ງນ້ຳດື່ມທີ່ປອດໄພຢູ່ເຮືອນ ຍັງເປັນບັນຫາໃຫຍ່ເຂດບໍລິເວນໂຮງຮຽນ, ບາງໂຮງຮຽນ ອາດຈະເລືອກທີ່ຈະຕິດຕັ້ງ ແລະ ນຳໃຊ້ລະບົບບຳບັດນ້ຳແບບງ່າຍດາຍ, ເຄື່ອງກອງນ້ຳ ຫຼື ເຄື່ອງຕົ້ມນ້ຳ.

### ການນຳໃຊ້ຂວດນ້ຳດື່ມ ຢູ່ຈີນ

ໃນເຂດຊົນນະບົດຂອງຈີນທີ່ອົງການ UNICEFເຮັດວຽກຢູ່ - ໄດ້ສະໜັບສະໜູນໂຄງການ WASH in Schools Plus, ບາງໂຮງຮຽນບໍ່ມີແຫຼ່ງນ້ຳທີ່ປອດໄພ. ໃນບັນດາໂຮງຮຽນເຫຼົ່ານີ້, ນັກຮຽນແຕ່ລະຄົນມີຂວດນ້ຳດື່ມຂອງຕົນເອງເພື່ອເອົາໄວ້ໃຊ້ສ່ວນຕົວ.

ພາຍໃຕ້ການຊີ້ນຳຂອງຄູ, ເດັກນັກຮຽນນຳໃຊ້ຂວດນ້ຳເພື່ອນຳເອົານ້ຳດື່ມມາແຕ່ບ້ານຂອງຕົນທຸກມື້. ປະຈຸບັນ ຂວດນ້ຳແມ່ນໂຄງການເປັນຜູ້ສະໜອງໃຫ້ ໂດຍມີລາຄາອັນລະ $1, ແຕ່ວ່າ ຈະມີການຊອກຫາ ແລະ ຈັດຊື້ຢູ່ທ້ອງຖິ່ນໃນອະນາຄົດ.

ໃນຊຸມຊົນທີ່ຂາດແຄນການສະໜອງນ້ຳທີ່ປອດໄພ, ໂຄງການສະໜອງເຄື່ອງຕົ້ມນ້ຳໄຟຟ້າສຳລັບໂຮງຮຽນ. ອັນນີ້ ຈະຖືກນຳໃຊ້ໄປພ້ອມກັນກັບການນຳໃຊ້ຂວດນ້ຳດື່ມ ເພື່ອຮັບປະກັນວ່າ ເດັກນັກຮຽນໝົດທຸກຄົນມີນ້ຳດື່ມໃນເວລາມາໂຮງຮຽນໝົດມື້.

*ແຫຼ່ງຂໍ້ມູນ:* UNICEF ປະເທດຈີນ.




## ໂຮງຮຽນທີ່ຫ້າວຫັນບຸກບືນ

ຊຸມຊົນທັງໝົດໃນໂຮງຮຽນ ເປັນເຈົ້າການໃນການນໍາພາ ເພື່ອປະຕິບັດໃຫ້ໄດ້ຕາມເງື່ອນໄຂ ໂຮງຮຽນໜຶ່ງດາວ. ພາຍໃຕ້ຫຼັກການສາມດາວ, ທັງການສະໜັບສະໜູນຈາກຊຸມຊົນ ແລະ ການສະໜັບສະໜູນຈາກລະບົບການສຶກສາແຫ່ງຊາດ ແລະ ໜ່ວຍງານອື່ນໆຂອງພາກລັດ ແມ່ນເປັນສ່ວນທີ່ສໍາຄັນຫຼາຍ, ແຕ່ວ່າໂຮງຮຽນເອງກໍ່ຕ້ອງເຂົ້າຮ່ວມຢ່າງຕັ້ງໜ້າເພື່ອເຮັດໃຫ້ຫຼັກການດັ່ງກ່າວປະສົບຜົນສໍາເລັດໄດ້.

ການເຂົ້າຮ່ວມຢ່າງຕັ້ງໜ້າ ໝາຍເຖິງ ຄູ ແລະ ຄູໃຫຍ່* ຕ້ອງມີຄວາມປະສົງ ແລະ ສາມາດທີ່ຈະຮັບຜິດຊອບກິດຈະກໍານອກຫຼັກສູດທີ່ຈໍາເປັນ ເພື່ອໃຫ້ສາມາດຫັນປ່ຽນ ແລະ ຮັກສາສະຖານະການເປັນໂຮງຮຽນໜຶ່ງດາວໄວ້. ອັນນີ້ ຈະຮຽກຮ້ອງໃຫ້ມີການເຂົ້າຮ່ວມໃນເບື້ອງຕົ້ນ ແລະ ການຕິດຕາມຢ່າງເປັນປົກກະຕິກັບໂຮງຮຽນ ໂດຍຜ່ານລະບົບການສຶກສາ ແລະ ສະຖາບັນອື່ນໆຂອງພາກລັດ. ການສະໜັບສະໜູນເພີ່ມເຕີມສໍາລັບຄູ ແລະ ຄູໃຫຍ່ ອາດຈະມີຄວາມຈໍາເປັນ ເຊັ່ນ: ຄູ່ມື ຫຼື ຕົ້ນແບບ, ແລະ ການຝຶກອົບຮົມ. ແຮງຈູງໃຈຕ່າງໆ ເພື່ອຊ່ວຍກະຕຸກຊຸກຍູ້ໃຫ້ຄູ ແລະ ຄູໃຫຍ່ ອາດຈະຕິດພັນກັບຂັ້ນຕອນການຮັບຮອງ *(ເບິ່ງ ພາກ 3.2 ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບການຮັບຮອງ).*

ໃນໄລຍະຍາວ, ມັນອາດຈະເປັນປະໂຫຍດທີ່ຈະເຊື່ອມສານມຸມມອງທີ່ກ່ຽວຂ້ອງຂອງຫຼັກການສາມດາວ ເຂົ້າໃນລະບົບການສຶກສາ. ອັນນີ້ ອາດຈະລວມທາງການເຮັດໃຫ້ການຕິດຕາມຫຼັກການສາມດາວ ກາຍມາເປັນສ່ວນໜຶ່ງຂອງໜ້າທີ່ຂອງຜູ້ກວດກາໂຮງຮຽນຢ່າງເປັນທາງການ ແລະ ລວມທັງແຜນງານຝຶກອົບຮົມຢ່າງເປັນປະຈໍາສໍາລັບຄູ.

ການເຂົ້າຮ່ວມຂອງຄູແມ່ນມີຄວາມສໍາຄັນຫຼາຍເຊັ່ນກັນ. ໃນຫຼາຍໆປະເທດ, ສະໂມສອນໂຮງຮຽນທີ່ກ່ຽວຂ້ອງກັບ WASH ແມ່ນມີຢູ່ແຕ່ເດີມແລ້ວ, ລວມທັງ ສະໂມສອນສຸຂະອະນາໄມ, ສຸຂະພາບ ຫຼື ສິ່ງແວດລ້ອມ. ສະໂມສອນເຫຼົ່ານີ້, ຫຼື ທີ່ຫາກໍ່ສ້າງຕັ້ງໃໝ່, ອາດຈະກາຍມາເປັນສູນກາງ ຄວາມພະຍາຍາມຂອງໂຮງຮຽນໃນການບັນລຸສະຖານະເປັນໂຮງຮຽນໜຶ່ງດາວໃຫ້ໄດ້. ສະມາຊິກຂອງສະໂມສອນ ສາມາດຊ່ວຍຄູຊີ້ນໍາກິດຈະກໍາການລ້າງມືເປັນກຸ່ມ ແລະ ການອະນາໄມຫ້ອງນໍ້າໄດ້; ເຂົ້າຮ່ວມໃນສຸຂະສຶກສາສໍາລັບນັກຮຽນທີ່ຍັງນ້ອຍ; ແລະ ເຂົ້າຮ່ວມໃນການສ້າງສາຍເຊື່ອມໂຍງລະຫວ່າງໂຮງຮຽນ ແລະ ຊຸມຊົນ.

* ໃນຄູ່ມືສະບັບນີ້, ‘ຄູໃຫຍ່’ ໝາຍເຖິງ ຄູຍິງ ຫຼື ຊາຍ ທີ່ຄຸ້ມຄອງບໍລິຫານໂຮງຮຽນ; ຜູ້ກ່ຽວຍັງອາດຈະຖືກເອີ້ນວ່າ ຄູໃຫຍ່ຍິງ, ຄູໃຫຍ່, ຫົວໜ້າ ຫຼື ອໍານວຍການໂຮງຮຽນ.



## ການສະໜັບສະໜູນຂອງຊຸມຊົນ

ໂຮງຮຽນ ຄວນໄດ້ຮັບການສະໜັບສະໜູນຢ່າງເຂັ້ມແຂງຈາກຊຸມຊົນອ້ອມຂ້າງເພື່ອຊ່ວຍໃຫ້ສາມາດຫັນປ່ຽນ ແລະ ຄົງໄວ້ເຊິ່ງສະຖານະເປັນໂຮງຮຽນໜຶ່ງດາວ. ດັ່ງນັ້ນ ເງື່ອນໄຂເບື້ອງຕົ້ນທີ່ຈະກາຍມາເປັນໂຮງຮຽນໜຶ່ງດາວ ແມ່ນກົນໄກທີ່ຈະເອື້ອອຳນວຍໃຫ້ສະມາຊິກຊຸມຊົນ, ຄູ, ຄູໃຫຍ່ ແລະ ເຈົ້າໜ້າທີ່ທ້ອງຖິ່ນຂອງພາກລັດຕ້ອງເຮັດວຽກຮ່ວມກັນ. ມີຫຼາຍໆໂຮງຮຽນ ໄດ້ມີສະມາຄົມພໍ່ແມ່ນັກຮຽນ-ຄູແລ້ວ ຫຼື ຄະນະກຳມະການປະສານງານຊຸມຊົນ-ໂຮງຮຽນ ທີ່ສາມາດເຮັດບົດບາດດັ່ງກ່າວນີ້; ໃນບາງໂຮງຮຽນ, ອາດຈຳເປັນຕ້ອງໄດ້ແຕ່ງຕັ້ງກຸ່ມ ຂຶ້ນໃໝ່ຂຶ້ນ.

ສະມາຄົມປະສານງານຊຸມຊົນ-ໂຮງຮຽນ ໃຫ້ການສະໜັບສະໜູນແກ່ຄູ ໃນກິດຈະກຳປະຈຳວັນ ແລະ ການເຮັດໜ້າທີ່ປະສານງານລະຫວ່າງໂຮງຮຽນ ແລະ ພໍ່ແມ່ນັກຮຽນ ເຊິ່ງເປັນຜູ້ມີສ່ວນຮ່ວມທີ່ເຂັ້ມແຂງທີ່ສຸດໃນການເຜີຍແຜ່ເພື່ອປັບປຸງໂຮງຮຽນ. ສິ່ງທີ່ສຳຄັນທີ່ສຸດ ພວກເຂົາເຈົ້າສາມາດລະດົມທຶນ ແລະ ຊັບພະຍາກອນອື່ນໆ ເພື່ອຊ່ວຍໃຫ້ບັນລຸເປົ້າໝາຍທີ່ວາງໄວ້, ລວມທັງທຶນໃນການຊື້ສະບູ ຫຼື ເຮັດສະບູ, ແລະ ແຮງງານ ແລະ ວັດສະດຸ ເພື່ອສ້ອມແປງ ຫຼື ສ້າງຫ້ອງນ້ຳ ແລະ ສະຖານທີ່ລ້າງມື. ໂດຍທົ່ວໄປແລ້ວ ຄະນະກຳມະການ ຈະສາມາດຊອກຫາຊັບພະຍາກອນຕ່າງໆພາຍໃນທ້ອງຖິ່ນໄດ້, ແລະ ພວກເຂົາເຈົ້າ ຈະເຮັດໜ້າທີ່ເຜີຍແຜ່ ເພື່ອຂໍການສະໜັບສະໜູນຜ່ານລະບົບການສຶກສາຂອງລັດຖະບານທ້ອງຖິ່ນຖ້າມີຄວາມຈຳເປັນ. ເຊັ່ນຕົວຢ່າງ: ພວກເຂົາອາດຈະຕັດສິນໃຈທີ່ຈະຕິດຕໍ່ເຈົ້າໜ້າທີ່ການສຶກສາທ້ອງຖິ່ນ ເພື່ອເຜີຍແຜ່ໃຫ້ລວມເອົາງົບປະມານສຳລັບຊື້ສະບູເຂົ້າໃນງົບປະມານປະຈຳປີຂອງໂຮງຮຽນ, ຫຼື ເພື່ອຂໍເບີກທຶນທີ່ຈັດສັນໄວ້ສະເພາະ ທີ່ຍັງບໍ່ທັນໄດ້ຈັດສົ່ງມາຮອດໂຮງຮຽນ.

ອາດຈະມີຄວາມຈຳເປັນຕ້ອງໄດ້ຮັບການສະໜັບສະໜູນຈາກ ຜູ້ສະໜັບສະໜູນພາຍນອກຈາກລະບົບການສຶກສາ ແລະ ໜ່ວຍງານຄູ່ຮ່ວມງານຕ່າງໆ ຫຼື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານບາງຈຳນວນ ໂດຍສະເພາະໃນໄລຍະເບື້ອງຕົ້ນຂອງແຜນງານ. ການສະໜັບສະໜູນນີ້, ເຖິງຢ່າງໃດກໍ່ຕາມ, ໂດຍປົກກະຕິຈະບໍ່ລວມເອົາທຶນຮອນສຳລັບ ອຸປະກອນ ຫຼື ສິ່ງຂອງຕ່າງໆ *(ເບິ່ງ ພາກ 3.1 ສຳລັບຂໍ້ມູນເພີ່ມເຕີມ ກ່ຽວກັບບົດບາດຂອງຄູ່ຮ່ວມງານຈາກພາຍນອກ).*

## 2.2 ໂຮງຮຽນສອງດາວ

ໃນໂຮງຮຽນສອງດາວ, ທຸກໆກິດຈະກຳກຸ່ມປະຈຳວັນຂອງໂຮງຮຽນໜຶ່ງດາວ ຈະຕ້ອງສືບຕໍ່ເນັ້ນໜັກ. ນອກຈາກນັ້ນ, ຈຸດສຸມທີ່ສຳຄັນຈະເນັ້ນໃສ່ການລ້າງມືພາຍຫລັງນຳໃຊ້ຫ້ອງນ້ຳ, ປັບປຸງສິ່ງອຳນວຍຄວາມສະດວກໃນຫ້ອງນ້ຳ ແລະ ການຈັດການກັບສຸຂະອະນາໄມເວລາມີປະຈຳເດືອນ, ແລະ ນ້ຳດື່ມທີ່ປອດໄພ. ໂຮງຮຽນສອງດາວ ຈະນຳໃຊ້ບາດກ້າວຕ່າງໆເພື່ອປະຕິບັດຂີດໝາຍວັດແທກເພີ່ມເຕີມໃໝ່ອີກສາມຂໍ້ ສຳລັບສຸຂະອະນາໄມ, ຄວາມສະອາດ ແລະ ນ້ຳ:

1. ເດັກ ລ້າງມືດ້ວຍສະບູພາຍຫຼັງໃຊ້ຫ້ອງນ້ຳ.
2. ມີສິ່ງອຳນວຍຄວາມສະດວກ ດ້ານສຸຂະພິບານ ແລະ ສຸຂະອະນາໄມໃນເວລາມີປະຈຳເດືອນທີ່ໄດ້ຮັບການປັບປຸງ.
3. ມີນ້ຳດື່ມຢູ່ໃນໂຮງຮຽນ.

ເທັກໂນໂລຊີທີ່ນຳໃຊ້ເພື່ອປັບປຸງສິ່ງອຳນວຍຄວາມສະດວກຕ່າງໆໃນໂຮງຮຽນສອງດາວ, ເທົ່າທີ່ເປັນໄປໄດ້, ຈະຕ້ອງມີລາຄາຕ່ຳ, ຊອກຫາໄດ້ໃນທ້ອງຖິ່ນ ແລະ ເໝາະສົມເພື່ອນຳໃຊ້ໃນຄົວເຮືອນ. ອັນນີ້ເພື່ອຮັບປະກັນວ່າແຜນງານຈະສາມາດຜັນຂະຫຍາຍອອກໄປໄດ້ທົ່ວປະເທດ. ມັນຍັງຈະຊ່ວຍໃຫ້ໂຮງຮຽນສາມາດສາທິດການປະຕິບັດທີ່ຖືກຕ້ອງໃຫ້ແກ່ສະມາຊິກຊຸມຊົນ, ບົດບາດທີ່ສາມາດເສີມສ້າງໃຫ້ເຂັ້ມແຂງ ດ້ວຍການສົ່ງເສີມ ແລະ ສະໜັບສະໜູນ ນັກຮຽນ ເພື່ອຊຸກຍູ້ພາກປະຕິບັດຕົວຈິງໃນການລ້າງມືທີ່ດີຢູ່ເຮືອນ.

ການປັບປຸງສິ່ງອຳນວຍຄວາມສະດວກ WASH ທັງໝົດຈະແມ່ນຄວາມຮັບຜິດຊອບໂດຍພື້ນຖານຂອງໂຮງຮຽນ ແລະ ຊຸມຊົນ, ພ້ອມການສະໜັບສະໜູນບາງສ່ວນຈາກລະບົບການສຶກສາ ແລະ ໂຄງສ້າງການສະໜັບສະໜູນພາຍນອກຕາມຄວາມເໝາະສົມ. ທຶນສຳລັບການຍົກລະດັບ ອາດຈະມາຈາກກອງທຶນລາງວັນ ທີ່ຕິດພັນກັບຂະບວນການຮັບຮອງ *(ເບິ່ງ 'ການຮັບຮູ້ ແລະ ໃຫ້ລາງວັນຕໍ່ຜົນສຳເລັດ', ພາກທີ 3.2).*



### ໂຮງຮຽນສອງດາວ

*ການປັບປຸງເພີ່ມເຕີມ*

| ກິດຈະກຳ (Interventions) | ຜົນຮັບ |
|---|---|
| **ສຸຂະສຶກສາໄດ້ຮັບການຂະຫຍາຍອອກໄປ ເພື່ອເນັ້ນໜັກໃຫ້ມີການລ້າງມືຫຼັງໃຊ້ຫ້ອງນ້ຳ; ສ້າງສະຖານທີ່ລ້າງມືຕາມຄວາມຈຳເປັນ; ມີການໃຫ້ຄວາມຮູ້ກ່ຽວກັບສຸຂະອະນາໄມເວລາມີປະຈຳເດືອນຢູ່ໂຮງຮຽນ** | • ເດັກ ຮຽນຮູ້ການລ້າງມືດ້ວຍສະບູໃນເວລາທີ່ສຳຄັນເຊັ່ນ: ກ່ອນອາຫານ (ໃນເວລາກິດຈະກຳການລ້າງມືເປັນກຸ່ມໃນແຕ່ລະວັນ) ແລະ ພາຍຫລັງຖ່າຍໜັກ.<br>• ສະຖານທີ່ລ້າງມື ໄດ້ຮັບການສາທິດໃຫ້ແກ່ຊຸມຊົນ.<br>• ນັກຮຽນຍິງ ໄດ້ຮັບຄວາມຮູ້ ແລະ ການສົ່ງເສີມໃຫ້ຮັກສາອະນາໄມໃນເວລາມີປະຈຳເດືອນ. |
| **ຫ້ອງນ້ຳເພີ່ມເຕີມ ແລະ/ຫຼື ໄດ້ຮັບການປັບປຸງໃຫ້ດີຂຶ້ນ, ບວກກັບສິ່ງອຳນວຍຄວາມສະດວກຕ່າງໆສຳລັບການຈັດການກັບສຸຂະອະນາໄມເວລາມີປະຈຳເດືອນ, ໄດ້ຮັບການກໍ່ສ້າງໃນບ່ອນທີ່ຈຳເປັນ** | • ມີຫ້ອງນ້ຳເພີ່ມເຕີມຢູ່ໂຮງຮຽນ ສຳລັບເດັກນັກຮຽນຊາຍ ແລະ ເດັກຍິງ<br>• ເດັກຍິງ ໄດ້ຮັບການຊຸກຍູ້ສົ່ງເສີມເພີ່ມເຕີມ ໃຫ້ເຂົ້າໂຮງຮຽນ ເພາະວ່າມີຄວາມສະອາດສ່ວນຕົວເພີ່ມເຕີມ ແລະ/ຫຼື ມີສິ່ງອຳນວຍຄວາມສະດວກໃນການຄຸ້ມຄອງສຸຂະອະນາໄມເວລາມີປະຈຳເດືອນ. |
| **ຈຸດບຳບັດນ້ຳທີ່ໃຊ້ທີ່ມີຄ່າໃຊ້ຈ່າຍຕ່ຳ ໄດ້ຮັບການນຳມາໃຊ້ໃນໂຮງຮຽນ** | • ເດັກມີນ້ຳດື່ມທີ່ປອດໄພຢູ່ໂຮງຮຽນ.<br>• ການບຳບັດນ້ຳທີ່ມີລາຄາຕ່ຳ ໄດ້ຮັບການສາທິດໃຫ້ແກ່ຊຸມຊົນ. |



## ການລ້າງມື

ໂຮງຮຽນສອງດາວ ຮັບປະກັນວ່າ ເດັກລ້າງມືດ້ວຍສະບູ ພາຍຫລັງໃຊ້ຫ້ອງນໍ້າ ລວມທັງພາກກິດຈະກໍາລ້າງມືເປັນກຸ່ມ. ຂັ້ນຕອນນີ້ ອາດຈະລວມມີການຍົກລະດັບ ແລະ ເພີ່ມຈໍານວນສະຖານທີ່ລ້າງມືໃກ້ກັບຫ້ອງນໍ້າໃນບາງໂຮງຮຽນ, ແຕ່ວ່າຈຸດສຸມຈະສືບຕໍ່ແນໃສ່ສຸຂະສຶກສາທີ່ຮອບດ້ານເພື່ອການປ່ຽນແປງພຶດຕິກໍາ.

ພາກສຸຂະສຶກສາ ອາດຈະສືບຕໍ່ເປັນສ່ວນໜຶ່ງຂອງກິດຈະກໍາລ້າງມືເປັນກຸ່ມຂອງເດັກ, ແລະ ອາດຈະເສີມດ້ວຍຈຸດອື່ນໆອີກໃນເວລາເຂົ້າຮຽນ. ຖ້າຫາກໂຮງຮຽນສ້າງສະຖານທີ່ລ້າງມືໃໝ່, ຄ່າໃຊ້ຈ່າຍ - ລວມທັງຄ່າຊື້ສະບູ - ສ່ວນໃຫຍ່ ຈະສືບຕໍ່ເປັນພາລະຂອງໂຮງຮຽນ ແລະ ຊຸມຊົນ. ແຕ່ລະປະເທດ ຈະກໍານົດຄວາມຈໍາເປັນດ້ານອຸປະກອນດ້ວຍຕົນເອງ *(ເບິ່ງ ພາກ 3.3)*.

## ຫ້ອງນໍ້າ ແລະ ການຈັດການ ສຸຂະອະນາໄມເວລາມີປະຈໍາເດືອນ

ໂຮງຮຽນສອງດາວ ຈະເພີ່ມທະວີໃຫ້ມີການນໍາໃຊ້ຫ້ອງນໍ້າ ແລະ ການມີຫ້ອງນໍ້າຫຼາຍຂຶ້ນ, ໂດຍສະເພາະ ສໍາລັບເດັກຍິງ. ຈໍານວນຂອງຫ້ອງນໍ້າໃໝ່ ຈະຂຶ້ນກັບມາດຕະຖານໃນໄລຍະການປະເມີນທີ່ກໍານົດໃນແຕ່ລະປະເທດ, ເຊິ່ງອາດຈະຢູ່ລະຫວ່າງສະພາບການໃນປະຈຸບັນໃນປະເທດດັ່ງກ່າວ ແລະ ມາດຕະຖານແຫ່ງຊາດໃນປະເທດນັ້ນ. ຖ້າຫາກບໍ່ມີມາດຕະຖານແຫ່ງຊາດ, ແມ່ນນໍາໃຊ້ມາດຕະຖານສາກົນທີ່ກໍານົດໃຫ້ມີຫ້ອງນໍ້າໜຶ່ງຫ້ອງຕໍ່ນັກຮຽນຍິງ 25 ຄົນ, ຫ້ອງນໍ້າໜຶ່ງຫ້ອງ ແລະ ໂຖຍ່ຽວໜຶ່ງໂຖ ສໍາລັບນັກຮຽນຊາຍ 50 ຄົນ, ແລະ ຫ້ອງນໍ້າສອງຫ້ອງ ສໍາລັບຄູ.[7]

ໂຮງຮຽນສອງດາວ ຍັງປະຕິບັດອີກບາດກ້າວໜຶ່ງ ເພື່ອສົ່ງເສີມ ແລະ ສະໜັບສະໜູນເດັກຍິງ ໃນໄລຍະທີ່ມີປະຈໍາເດືອນ ທີ່ເຮັດໃຫ້ເຂົາເຈົ້າບໍ່ຕ້ອງຂາດໂຮງຮຽນ. ອັນນີ້ ປະກອບມີການໃຫ້ຄວາມຮູ້ດ້ານອະນາໄມໃນເວລາມີປະຈໍາເດືອນຢູ່ໂຮງຮຽນ, ພ້ອມໆກັບຂັ້ນຕອນຕ່າງໆເພື່ອຮັບປະກັນວ່າ ເດັກຍິງມີສະຖານທີ່ທີ່ເປັນສ່ວນຕົວ ໃນການຊໍາລະລ້າງ ແລະ ປ່ຽນຜ້າອະນາໄມ ຫຼື ເຄື່ອງນຸ່ງ.



ສິ່ງອຳນວຍຄວາມສະດວກທີ່ມີຢູ່ ຈະຖືກນຳໃຊ້ໃນບາງກໍລະນີ; ໃນສະພາບການອື່ນ, ສິ່ງອຳນວຍຄວາມສະດວກໃໝ່ ອາດຈຳເປັນຕ້ອງໄດ້ກໍ່ສ້າງຂຶ້ນ. ບາດກ້າວອື່ນໆ ທີ່ອາດຈະໃຊ້ເພື່ອສົ່ງເສີມເດັກຍິງ ລວມທັງ ການມີຜ້າອະນາໄມ ແລະ ເຄື່ອງນຸ່ງສຳຮອງ (ເຊັ່ນ: ຊຸດເຄື່ອງແບບນັກຮຽນ) ໄວ້ໃຫ້ເດັກໃນເວລາສຸກເສີນ, ພ້ອມດ້ວຍປັບປຸງແຜນງານການຝຶກອົບຮົມສຳລັບຄູໃຫ້ດີຂຶ້ນ.

## ນໍ້າດື່ມທີ່ປອດໄພ

ສຸດທ້າຍ, ໂຮງຮຽນສອງດາວ ຕ້ອງຮັບປະກັນວ່າ ມີການສະໜອງນໍ້າດື່ມທີ່ປອດໄພໃຫ້ແກ່ນັກຮຽນຢູ່ໂຮງຮຽນ. ໂດຍທົ່ວໄປແລ້ວ ນັກຮຽນຍັງສືບຕໍ່ນຳເອົາຂວດນໍ້າດື່ມຂອງຕົນມາຈາກເຮືອນ, ແຕ່ວ່າໂຮງຮຽນຄວນມີນໍ້າດື່ມທີ່ປອດໄພສະໜອງໃຫ້ຢູ່ໂຮງຮຽນ ເຊິ່ງຈະເຮັດໃຫ້ນັກຮຽນສາມາດເອົາຕື່ມນໍ້າໃສ່ຂວດນໍ້າຂອງເຂົາເຈົ້າໃນໄລຍະເຂົ້າໂຮງຮຽນໄດ້. ມັນຍັງເປັນການສະໜອງນໍ້າທີ່ປອດໄພໃຫ້ແກ່ນັກຮຽນ ຜູ້ທີ່ບໍ່ມີນໍ້າດື່ມທີ່ປອດໄພຢູ່ເຮືອນ.

ສ່ວນໃຫຍ່, ໂຮງຮຽນຈະນຳໃຊ້ແຫຼ່ງນໍ້າທີ່ມີຢູ່ເດີມ ເຊິ່ງຢູ່ໃກ້ກັບໂຮງຮຽນ ແຕ່ວ່າຈະຕ້ອງບຳບັດນໍ້າດັ່ງກ່າວ ໂດຍຜ່ານເທັກໂນໂລຊີທີ່ມີຄ່າໃຊ້ຈ່າຍຕໍ່າທີ່ຫາໄດ້ຢູ່ທ້ອງຖິ່ນ ເຊັ່ນ ເຄື່ອງກອງນໍ້າເຊຣາມິກ, ການກອງນໍ້າແບບຊ້າຜ່ານດິນຊາຍ, ການຂ້າເຊື້ອດ້ວຍແສງຕາເວັນ ຫຼື ສານຄໍລີນ. ໂຮງຮຽນອາດຈະເລືອກໃຊ້ວິທີລະດົມທຶນພາຍໃນ ຫຼື ເຜີຍແຜ່ ເພື່ອປັບປຸງແຫຼ່ງນໍ້າທີ່ໂຮງຮຽນມີຢູ່ແຕ່ເດີມ.



## 2.3 ໂຮງຮຽນສາມດາວ

ໂຮງຮຽນສາມດາວ ຈະປະຕິບັດໄດ້ຕາມມາດຕະຖານແຫ່ງຊາດ ສໍາລັບ WASH ໃນໂຮງຮຽນ, ເຊິ່ງມີຄວາມສໍາຄັນເພື່ອຮັບປະກັນວ່າ ສາມາດປະຕິບັດໄດ້ຕາມຄວາມຕ້ອງການຂອງນັກຮຽນທຸກຄົນ ແລະ ຄວາມບໍ່ເທົ່າທຽມແຫ່ງຊາດໃດໆຕໍ່ກັບການເຂົ້າເຖິງ WASH ໃນໂຮງຮຽນ ແມ່ນໄດ້ຮັບການລຶບລ້າງຢ່າງຕໍ່ເນື່ອງ.

ມາດຕະຖານ ປະກອບມີບັນທັດຖານແຫ່ງຊາດ ສໍາລັບສິ່ງອໍານວຍຄວາມສະດວກດ້ານ WASH, ລວມທັງຂໍ້ກໍານົດໃນການອອກແບບ, ຈໍານວນສິ່ງອໍານວຍຄວາມສະດວກທຽບກັບຂະໜາດຂອງໂຮງຮຽນ ແລະ ການເຂົ້າເຖິງສິ່ງອໍານວຍຄວາມສະດວກເຫຼົ່ານັ້ນສໍາລັບເດັກທີ່ມີຄວາມພິການ. ມາດຕະຖານຕ່າງໆ ຍັງສາມາດປະກອບເຂົ້າໃນສຸຂະສຶກສາໃນໂຮງຮຽນ, ແລະ ຈະຊ່ວຍແກ້ໄຂບັນຫາທີ່ຕິດພັນກັບຄວາມຮັບຜິດຊອບໃນການບົວລະບັດ ແລະ ສ້ອມແປງສິ່ງອໍານວຍຄວາມສະດວກດັ່ງກ່າວ.

ໂຮງຮຽນ ແລະ ຊຸມຊົນຫຼາຍແຫ່ງ ຕ້ອງການການສະໜັບສະໜູນຈາກລະບົບການສຶກສາ ເພື່ອຍົກລະດັບສິ່ງອໍານວຍຄວາມສະດວກ ແລະ ລະບົບຕ່າງໆ ເພື່ອປະຕິບັດໄດ້ຕາມມາດຕະຖານແຫ່ງຊາດ. ມີບາງໂຮງຮຽນ ອາດຕ້ອງການການຊ່ວຍເຫຼືອຈາກຄູ່ຮ່ວມງານພາຍນອກ. ໃນຫຼາຍປະເທດທີ່ບໍ່ມີມາດຕະຖານແຫ່ງຊາດແບບຄົບຊຸດ, ຄູ່ມືສາກົນທີ່ສ້າງຂຶ້ນໂດຍອົງການ UNICEF ແລະ ອົງການອະນາໄມໂລກ ໃນຮູບແບບທີ່ນໍາໃຊ້ຄ່າໃຊ້ຈ່າຍຕໍ່າ ອາດຈະນໍາມາໃຊ້ໄດ້ເຊັ່ນກັນ ເພື່ອເປັນບ່ອນອີງ ໃນການກໍານົດເງື່ອນໄຂມາດຕະຖານ ສໍາລັບໂຮງຮຽນສາມດາວ. ເຖິງຢ່າງໃດກໍ່ຕາມ, ອັນນີ້ອາດຈະເປັນທາງເລືອກໃນໄລຍະຊົ່ວຄາວ: ທຸກໆປະເທດ ຄວນຈະພັດທະນາມາດຕະຖານແຫ່ງຊາດ, ແລະ ແຜນງານສະໜັບສະໜູນຈາກພາຍນອກ ສາມາດໃຫ້ການຊ່ວຍເຫຼືອໃນຂະບວນການພັດທະນາມາດຕະຖານແຫ່ງຊາດໄດ້.



### ໂຮງຮຽນສາມດາວ

*ປະຕິບັດໄດ້ຕາມມາດຕະຖານແຫ່ງຊາດ*

| ກິດຈະກໍາ (Interventions) | ຜົນຮັບ |
|---|---|
| **ສິ່ງອໍານວຍຄວາມສະດວກໃນໂຮງຮຽນ ແລະ ລະບົບຕ່າງໆ ໄດ້ຮັບການຍົກລະດັບ ເພື່ອປະຕິບັດໃຫ້ໄດ້ຕາມມາດຕະຖານແຫ່ງຊາດ** | • ບັນທັດຖານທາງສັງຄົມ ກ່ຽວກັບພຶດຕິກໍາທີ່ຖືກຫຼັກອະນາໄມ ແມ່ນໄດ້ຮັບການວາງອອກ.<br>• ໂຮງຮຽນ ສາມາດສະໜອງການເຂົ້າເຖິງ WASH ໄດ້ຢ່າງເຕັມສ່ວນສໍາລັບນັກຮຽນທຸກຄົນ, ລວມທັງເດັກທີ່ມີຄວາມພິການ.<br>• ຄວາມບໍ່ເທົ່າທຽມກັນ ແມ່ນຖືກກໍາຈັດໃຫ້ໝົດໄປ ໂດຍການຮັບປະກັນວ່າ ທຸກໆໂຮງຮຽນໃນປະເທດ ມີມາດຕະຖານດຽວກັນສໍາລັບ WASH ໃນໂຮງຮຽນ. |

## ການປະຕິບັດຕົວຈິງຂອງໂຄງການສຸຂະພາບດີໃນໂຮງຮຽນ

ໜຶ່ງໃນຕົວຢ່າງຂອງການຈັດຕັ້ງປະຕິບັດໃນລະດັບທີ່ເໝາະສົມ ເພື່ອສົ່ງເສີມສຸຂະພາບເດັກ ແລະ ການສຶກສາ ແມ່ນແຜນງານດູແລສຸຂະພາບທີ່ຈຳເປັນ (Essential Health Care Program) ທີ່ໄດ້ຮັບການຈັດຕັ້ງປະຕິບັດໂດຍ ກົມການສຶກສາ ປະເທດຟີລິບປິນ. ແຜນງານດັ່ງກ່າວ ແມ່ນໄດ້ຮັບການສະໜັບສະໜູນໂດຍ ອົງການຈັດຕັ້ງສາກົນຕ່າງໆ ເຊັ່ນ: UNICEF, AusAID ແລະ BMZ, ໂດຍຜ່ານ GIZ, ໃນນັ້ນ, ລວມທັງຜູ້ມີສ່ວນຮ່ວມຈາກພາຍໃນ ເຊັ່ນ: ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ຢູ່ປະເທດຟີລິບປິນ Fit for School Inc.[8]



ກິດຈະກຳເປັນກຸ່ມສາມກິດຈະກຳ - ລ້າງມືທຸກມື້ດ້ວຍສະບູ, ຖູແຂ້ວທຸກມື້ດ້ວຍຢາສີຟັນຟູອໍລາຍ ແລະ ການຂ້າແມ່ທ້ອງສອງຄັ້ງຕໍ່ປີ - ຖືເປັນແຜນງານຫຼັກລະດັບປະເທດ. ຈຸດປະສົງແມ່ນເພື່ອຫຼຸດຜ່ອນອັດຕາການເປັນພະຍາດຖອກທ້ອງ, ອັກເສບທາງເດີນຫາຍໃຈ, ແມ່ທ້ອງ ແລະ ແຂ້ວຜຸຢ່າງຮຸນແຮງ. ແຜນງານ Essential Health Care Program ປະກອບມີຄວາມລຽບງ່າຍ ແລະ ຄວາມຍືນຍົງ, ເຊິ່ງຊ່ວຍໃຫ້ສາມາດຜັນຂະຫຍາຍອອກໄປຢ່າງໄວວາ, ເຊິ່ງຂະຫຍາຍໄປເຖິງເດັກ 2 ລ້ານຄົນ ໃນປີ 2011, ນຳໃຊ້ຊັບພະຍາກອນມະນຸດ ແລະ ເງິນທີ່ມີຢູ່ເດີມ ຈາກລັດຖະບານທ້ອງຖິ່ນ.

ກິດຈະກຳລ້າງມືເປັນກຸ່ມໃນແຕ່ລະວັນ ແມ່ນໄດ້ຮັບການຊີ້ນຳໆພາໂດຍຄູ ແລະ ໂດຍປົກກະຕິ ຈະແມ່ນກ່ອນຈະຮັບປະທານອາຫານ, ກ່ອນທ່ຽງ ຫຼື ໃນເວລາອາຫານວ່າງ. ຢູ່ໂຮງຮຽນສ່ວນໃຫຍ່, ໄດ້ຕິດຕັ້ງກ໊ອກນ້ຳແບບງ່າຍໆ ເພື່ອໄວ້ລ້າງມື, ເຊິ່ງປະກອບມີທໍ່ທີ່ຕິດຕັ້ງແບບລາດອຽງ ເຊິ່ງຈະເຮັດໃຫ້ນ້ຳໄຫຼມາຢ່າງພຽງພໍສຳລັບກຸ່ມນັກຮຽນປະມານ 20 ຄົນ ເພື່ອລ້າງມືຂອງເຂົາເຈົ້າ (ເປັນລະບົບເຈາະຮູໃສ່ທໍ່). ບ່ອນລ້າງມືມີຄ່າໃຊ້ຈ່າຍຕໍ່າກວ່າ US$40 ໃນການກໍ່ສ້າງ ແລະ ສາມາດຕິດຕັ້ງໃນໂຮງຮຽນທີ່ມີລະບົບທໍ່ນ້ຳ ແລະ ໂຮງຮຽນທີ່ບໍ່ມີ, ເຊິ່ງໃນກໍລະນີນີ້ ອາດຈະຂົນນ້ຳມາໃສ່ອ່າງເກັບນ້ຳ ທີ່ເປັນສ່ວນໜຶ່ງຂອງສິ່ງອຳນວຍຄວາມສະດວກດັ່ງກ່າວ.

ໂຄງການສຸຂະພາບດີໃນໂຮງຮຽນ ເຄື່ອງຮັບໃຊ້ດ້ານອະນາໄມ ປະກອບມີ ສະບູ ແລະ ຢາຖູແຂ້ວ, ແລະ ຄ່າໃຊ້ຈ່າຍແມ່ນປະມານ 60 ເຊັນຕໍ່ນັກຮຽນຄົນໜຶ່ງ ຕໍ່ປີ. ຄ່າໃຊ້ຈ່າຍທີ່ຕໍ່າດັ່ງກ່າວຮັບປະກັນເຖິງຂໍ້ຜູກພັນຂອງລັດໃນໄລຍະຍາວ ທີ່ອາດຈະຫ່າງໄກເກີນກວ່າທີ່ວິທີການແບບດັ້ງເດີມ ທີ່ອີງໃສ່ການບໍລິຈາກ ແລະ ຜູ້ໃຫ້ການສະໜັບສະໜູນຫຼັກ. ຢາຂ້າແມ່ທ້ອງໄດ້ຮັບການສະໜອງໃຫ້ໂດຍ ກົມສຸຂະພາບ ປະເທດຟີລິບປິນ.

ແຜນງານ Essential Health Care Program ຍັງໄດ້ສ້າງຫຼັກຖານທີ່ຈະແຈ້ງຂອງຜົນຮັບ: ການປະເມີນຜົນອັນໜຶ່ງໄດ້ພົບວ່າ ການຂາດຮຽນ, ການຂາດສານອາຫານ, ການມີແມ່ທ້ອງ ແລະ ແຂ້ວຜຸ ແມ່ນໄດ້ມີອັດຕາຫຼຸດລົງຢ່າງຫຼວງຫຼາຍໃນກຸ່ມນັກຮຽນຂອງໂຮງຮຽນທີ່ເຮັດກິດຈະກຳນີ້.

| ຕົວຊີ້ວັດ | ການຫຼຸດຜ່ອນ |
|---|---|
| ມື້ຂາດຮຽນ, 2009 | 27.3% |
| ຕໍ່າກວ່າດັດສະນີມວນການປົກກະຕິ | 20.4% |
| ມີພະຍາດແມ່ທ້ອງຫຼາຍ | 47.2% |
| ມີໂອກາດທີ່ຈະເປັນແຂ້ວຜຸ | 38.5% |

*Source*: Monse, Bella, et al., 'The Fit for School Health Outcome Study: A longitudinal survey to assess health impacts of an integrated school health programme in the Philippines', *BMC Public Health*, vol. 13, no. 256, 2013, pp. 1–10.

*Source*: Joint Call to Action for WASH in Schools, 'Raising Even More Clean Hands: Advancing health, learning and equity through WASH in Schools', United Nations Children's Fund, New York, 2012, pp. 14–15.

# 3.0 ການຄຸ້ມຄອງຫຼັກການສາມດາວ

## 3.1 ບົດບາດຂອງລັດຖະບານ ແລະ ຄູ່ຮ່ວມງານພາຍນອກ

ແນວຄິດທີ່ສຳຄັນຢູ່ເບື້ອງຫຼັງຂອງຫຼັກການສາມດາວນີ້ ແມ່ນໂຮງຮຽນ ແລະ ຊຸມຊົນເຈົ້າພາບຂອງພວກເຂົາ ສາມາດ ແລະ ຄວນສ້າງເງື່ອນໄຂຂັ້ນຕ່ຳເພື່ອສົ່ງເສີມສຸຂະພາບທີ່ດີໃນໂຮງຮຽນ, ສົ່ງເສີມສຸຂະອະນາໄມ ໂດຍນ◌ຳໃຊ້ຊັບພະຍາກອນທີ່ມີໃນທ້ອງຖິ່ນ. ໄລຍະໂຮງຮຽນໜຶ່ງດາວ ແມ່ນໄດ້ຮັບການອອກແບບສະເພາະເພື່ອຈະໃຫ້ມີຄ່າໃຊ້ຈ່າຍທີ່ຕ່ຳທີ່ສຸດ ເຖິງແມ່ນວ່າຊຸມຊົນທີ່ທຸກຍາກທີ່ສຸດ ກໍ່ສາມາດບັນລຸຂີດໝາຍສາມຢ່າງສຳລັບສຸຂະພາບ, ຄວາມສະອາດ ແລະ ນ້ຳ ໂດຍນຳໃຊ້ຊັບພະຍາກອນທຳມະຊາດຂອງຕົນເອງ. ບົດຮຽນທີ່ກວ້າງຂວາງຂອງຂະແໜງການ WASH ແມ່ນປະສົບການພິເສດບົນພື້ນຖານ ຫຼັກການທີ່ຊຸມຊົນເປັນເຈົ້າການ ໃນວຽກງານດ້ານສຸຂາພິບານ (Community Approaches to Total Sanitation (CATS)) ການລິເລີ່ມໃໝ່ ທີ່ຊ່ວຍກຳຈັດການຖ່າຍຊະຊາຍ ສະແດງໃຫ້ເຫັນວ່າ ຊຸມຊົນຮັບເອົາຄວາມຮັບຜິດຊອບເພື່ອປັບປຸງເງື່ອນໄຂ ໃນວິທີການນີ້ ພວກເຂົາເຈົ້າມີຄວາມເປັນໄປໄດ້ທີ່ຈະສືບຕໍ່ໃຫ້ມີຄວາມກ້າວໜ້າຕໍ່ໄປ.

ໃນຂະນະທີ່ຮັບຮູ້ເຖິງຄວາມຮັບຜິດຊອບຂອງລັດຖະບານ ເພື່ອຮັບປະກັນວ່າ ໂຮງຮຽນລັດສາມາດມາດຕະຖານຂັ້ນຕ່ຳຂອງ WASH ໄດ້, ມັນມີຄວາມສຳຄັນທີ່ໜ່ວຍງານຂອງລັດ ແລະ ອົງການທີ່ສະໜັບສະໜູນ ຕ້ອງຕ້ານທານກັບສິ່ງລໍ້ໃຈທີ່ເຮັດໃຫ້ອຸດໜູນຫຼັກການສາມດາວຫຼາຍຈົນເກີນໄປ, ໂດຍສະເພາະໃນໄລຍະເລີ່ມຕົ້ນ. ຄວາມຮັບຜິດຊອບຂອງລັດຖະບານ ໃນການສະໜັບສະໜູນຫຼັກການດັ່ງກ່າວ ແມ່ນໜ້ອຍລົງໃນດ້ານການໃຫ້ທຶນດ້ານອຸປະກອນ (hardware) ແລະ ເພີ່ມການສະໜັບສະໜູນຫຼາຍຂຶ້ນເພື່ອສ້າງສະພາບແວດລ້ອມດ້ານນະໂຍບາຍສົ່ງເສີມ, ການອອກແບບແຜນງານ ແລະ ການສ້າງຂະບວນການຈັດຕັ້ງປະຕິບັດກິດຈະກຳສຸຂະອະນາໄມປະຈຳວັນໃຫ້ເປັນລະບົບ ເຊິ່ງຈະລວມທັງການຝຶກອົບຮົມຄູໃນການສົ່ງເສີມສຸຂະອະນາໄມ, ການວາງມາດຕະຖານ, ການຕິດຕາມ ແລະ ຮັບຮອງ. ໃນບາງຂົງເຂດເຫຼົ່ານີ້, ລັດຖະບານ ອາດຈະໄດ້ຮັບຜົນປະໂຫຍດຈາກການຊ່ວຍເຫຼືອຂອງໜ່ວຍງານສະໜັບສະໜູນຈາກພາຍນອກ ເຊັ່ນ ອົງການ UNICEF ແລະ GIZ.

ແຕ່ລະປະເທດ ຈະກຳນົດບົດບາດ ແລະ ຄວາມຮັບຜິດຊອບຂອງໜ່ວຍງານຕ່າງໆຂອງລັດ, ໂດຍການເປັນເຈົ້າການຂອງກະຊວງສຶກສາ ແລະ ໄດ້ຮັບການສະໜັບສະໜູນໂດຍບັນດາກະຊວງຕ່າງໆ ທີ່ຮັບຜິດຊອບວຽກງານນ້ຳ, ສຸຂະພິບານ ແລະ ອະນາໄມ, ການພັດທະນາຊົນນະບົດ ຫຼື ການແບ່ງເຂດຄວາມຮັບຜິດຊອບ, ແລະ ບັນດາອົງການຈັດຕັ້ງຕ່າງໆຂອງລັດ.



## 3.2 ການຕິດຕາມ ແລະ ຮັບຮອງໂຮງຮຽນ

ດັ່ງເປັນສ່ວນໜຶ່ງຂອງຫຼັກການສາມດາວ, ຜູ້ຈັດການແຜນງານ ອາດຈະອອກແບບລະບົບການຮັບຮອງສຳລັບ WASH ໃນໂຮງຮຽນ ທີ່ຮັບຮູ້ ແລະ ໃຫ້ລາງວັນຢ່າງແທດເໝາະຕໍ່ຄວາມພະຍາຍາມຂອງໂຮງຮຽນ ແລະ ຊຸມຊົນ. ແນວຄວາມຄິດນີ້ ໄດ້ຮັບການຢືມມາໃຊ້ຈາກຜົນສຳເລັດຂອງການລິເລີ່ມວຽກງານ CATS, ທີ່ເຊິ່ງບັນທັດຖານໃໝ່ທາງສັງຄົມດ້ານຄວາມສະອາດ ແມ່ນໄດ້ຮັບການສ້າງຂຶ້ນໃນຊຸມຊົນ ໂດຍຜ່ານຂະບວນການສະເພາະແບບເປັນຊຸດ. ການກວດກາແມ່ນໄດ້ດຳເນີນໄປເພື່ອຮັບຮອງວ່າ ເປັນຊຸມຊົນທີ່ປາດສະຈາກການຖ່າຍຊະຊາຍ, ການເສີມສ້າງໃຫ້ເຂັ້ມແຂງ ແລະ ການຮັບຮູ້ການປ່ຽນແປງພຶດຕິກຳແບບລວມໝູ່ທີ່ໄດ້ເກີດຂຶ້ນ.

ແຕ່ລະປະເທດ ແລະ/ຫຼື ໂຮງຮຽນຂັ້ນເມືອງ ຈະກຳນົດຂະບວນການຮັບຮອງ ແລະວິທີການຕິດຕາມ ສຳລັບຫຼັກການສາມດາວ ດ້ວຍຕົນເອງ. ໃນທຸກໆກໍລະນີ, ຂະບວນການຕິດຕາມ ຈະເພີ່ມຄວາມຮັບຜິດຊອບທີ່ສາມາດກວດສອບໄດ້ ແລະ ຜູ້ກວດກາ ຈະເອື່ອຍອີງໃສ່ ບັນຊີກວດກາສະເພາະຂອງຕົວຊີ້ວັດຂອງປະເທດທີ່ມີຄວາມໂປ່ງໃສ ທີ່ມາຈາກເກນເງື່ອນໄຂຂອງວິທີການທົ່ວໄປ ແລະ ອີງໃສ່ມາດຕະຖານ WASH ໃນໂຮງຮຽນ. ໃນບາງບ່ອນ, ອີງການສະໜັບສະໜູນຈາກພາຍນອກຍັງມີບົດບາດໃນການສ້າງຄວາມເຂັ້ມແຂງ ຫຼື ໃຫ້ການສະສະໜັບສະໜູນອື່ນໆ ໃຫ້ແກ່ທີມງານຮັບຮອງ.

ຂັ້ນຕອນການກວດສອບ ແລະ ຮັບຮອງ ຈະນຳໃຊ້ ຊຸດຕົວຊີ້ວັດໃນການຕິດຕາມທີ່ລຽບງ່າຍ ແລະ ຈຳກັດ ເຊິ່ງຈະຊ່ວຍໃຫ້ວັດແທກຄວາມຄືບໜ້າໃນໃນຂົງເຂດທີ່ເປັນບູລິມະສິດໄດ້ດີທີ່ສຸດ, ໂດຍມີຈຸດສຸມເນັ້ນໜັກໃສ່ການປ່ຽນແປງພຶດຕິກຳ. ໂຮງຮຽນ ຈະຕ້ອງໄດ້ຮັບການຢັ້ງຢືນເສຍກ່ອນ ເພື່ອຈະໄດ້ຮັບສະຖານະພາບເປັນໂຮງຮຽນໜຶ່ງດາວ ແລະ ອາດຈະໄດ້ຮັບການຍອມຮັບຈາກສັງຄົມ ຫຼື ຈົນເຖິງໄດ້ຮັບລາງວັນຈາກການປະຕິບັດດັ່ງກ່າວ. ການຮັບຮອງຂອງລັດ ຍັງມີຜົນກະທົບຕໍ່ການຮັບຮູ້ເຖິງຄວາມພະຍາຍາມຂອງຊຸມຊົນໃນການບັນລຸຕາມຂີດໝາຍດັ່ງກ່າວ, ດັ່ງນັ້ນ ຈຶ່ງເປັນການສິ່ງເສີມການມີສ່ວນຮ່ວມຂອງທ້ອງຖິ່ນ ແລະ ຄວາມເປັນເຈົ້າການຂອງຂັ້ນຕອນດັ່ງກ່າວ. ຍິ່ງໄປກວ່ານັ້ນ, ການຮັບຮອງ ຍັງສົ່ງເສີມການແຂ່ງຂັນໃຫ້ມີສຸຂະພາບດີລະຫວ່າງໂຮງຮຽນ ແລະ ເມືອງຕ່າງໆ.

### ການຮັບຮູ້ ແລະ ການໃຫ້ລາງວັນຕໍ່ຜົນສຳເລັດ

ຂະບວນການຮັບຮອງຫຼັກການສາມດາວ ໃຫ້ໂອກາດຫຼວງຫຼາຍໃນການທີ່ຈະໄດ້ຮັບຮູ້ຜົນງານ, ເຮັດໃຫ້ຄູ່ຮ່ວມງານທຸກຄົນເຫັນໄດ້ ແລະ ໃຫ້ສິ່ງຈູງໃຈສຳລັບການປັບປຸງເພີ່ມເຕີມ. ເຊັ່ນຕົວຢ່າງ, ລະບົບຂອງການປັກທຸງ, ກະດານໂຄສະນາ ຫຼືຮູບແບບອື່ນໆ ອາດຈະຖືກນຳໃຊ້ ເພື່ອເປັນເຄື່ອງໝາຍຜົນງານຂອງໂຮງຮຽນ, ພ້ອມທັງກິດຈະກຳພິເສດທີ່ມີເດັກນັກຮຽນ ແລະ ຕາງໜ້າຊຸມຊົນເຂົ້າຮ່ວມ ເພື່ອເຜີຍແຜ່ໝາກຜົນຂອງຂີດໝາຍດັ່ງກ່າວ. ການແຂ່ງຂັນ ແລະ ງານເປີດໂຕຕ່າງໆ ຍັງອາດຈະເປັນສ່ວນໜຶ່ງຂອງຂັ້ນຕອນການຮັບຮອງອີກດ້ວຍ.

#### ທາງເລືອກຕ່າງໆ ສຳລັບການຕິດຕາມ ແລະ ຮັບຮອງ

ພາຍຫຼັງການສ້າງເງື່ອນໄຂສະເພາະສຳລັບໂຮງຮຽນໜຶ່ງດາວ, ສອງ ແລະ ສາມດາວ, ອີງໃສ່ຄຳເຫັນຕ່າງໆໃນຄູ່ມືພາກສະໜາມສະບັບນີ້, ປະເທດຕ່າງໆ ແລະໂຮງຮຽນຂັ້ນເມືອງ ຈະພັດທະນາຂັ້ນຕອນການຕິດຕາມ ແລະ ຮັບຮອງ ທີ່ລວມເອົາລາຍການກວດກາ ແລະ ເຄື່ອງມືອື່ນໆເຂົ້ານຳ.

ທາງເລືອກສຳລັບການຮັບຮອງ ລວມມີ:

- ຜູ້ກວດກາໂຮງຮຽນ ຫຼື ອາສາສະມັກທີ່ເຮັດວຽກດ້ານການສຶກສາໃນເຂດຫ່າງໄກ ສາມາດດຳເນີນການຕິດຕາມກວດກາ ດັ່ງເປັນສ່ວນໜຶ່ງຂອງການຢ້ຽມຢາມປະຈຳວັນ ແລະ/ຫຼື ຜູ້ກວດກາເອກະລາດ ສາມາດດຳເນີນການຕິດຕາມກວດກາ ໂດຍຜ່ານວິທີການຕ່າງໆທີ່ຄ້າຍຄືກັນກັບທີ່ນຳໃຊ້ໃນການຮັບຮອງຊຸມຊົນທີ່ປາດສະຈາກການຖ່າຍຊະຊາຍ ໃນແຜນງານ CATS.
- ການຕິດຕາມກວດກາແບບມີສ່ວນຮ່ວມ ແມ່ນຈຸດສຳຄັນທີ່ຈະບັນລຸເປົ້າໝາຍຄວາມເປັນເຈົ້າການ ແລະ ຄວາມຍືນຍົງ. ນັກຮຽນ, ພໍ່ແມ່ນັກຮຽນ, ພະນັກງານໃນໂຮງຮຽນ ແລະ ສະມາຊິກຊຸມຊົນ ຄວນເຂົ້າຮ່ວມໃນການຕິດຕາມກວດກາພຶດຕິກຳ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ.
- ນັກວາງແຜນ ສາມາດເຊື່ອມສານຄວາມຍືນຍົງເຂົ້າໃນຂະບວນການຮອງຮັບ ໂດຍຜ່ານການຮັບຮອງທີ່ຈຳກັດດ້ານເວລາ ຫຼື ດ້ວຍການຮັບຮອງໂຮງຮຽນໃດໜຶ່ງ ພາຍຫຼັງທີ່ໂຮງຮຽນສາມາດຮັກສາສະຖານະຂອງຕົນໄດ້ໃນໄລຍະໃດໜຶ່ງທີ່ແນ່ນອນເທົ່ານັ້ນ, ເຊັ່ນຕົວຢ່າງ: ຫົກເດືອນ ຫຼື ໜຶ່ງປີ.
- ພິທີການຢັ້ງຢືນ ສາມາດຈັດໃນມື້ ວັນລ້າງມືໂລກ ເພື່ອເຮັດໃຫ້ມີການຮັບຮູ້ຫຼາຍຂຶ້ນ, ແລະ ຊື່ໂຮງຮຽນ ສາມາດຕີພິມໃສ່ສື່ຕ່າງໆ. ອາດຈະມີການມອບລາງວັນ, ທຸງ, ປ້າຍ ຫຼື ໃບຮັບຮອງໃຫ້.

ນອກຈາກນັ້ນ, ຂັ້ນຕອນການຮັບຮອງ ອາດຈະເປັນພື້ນຖານສຳລັບການໃຫ້ລາງວັນດ້ານການເງິນທີ່ຕິດພັນກັບ WASH ຫຼື ການເຂົ້າເຖິງການສະໜັບສະໜູນພິເສດ ສຳລັບການປັບປຸງເພີ່ມເຕີມ. ໂຮງຮຽນທີ່ສາມາດບັນລຸສະຖານະເປັນໂຮງຮຽນໜຶ່ງດາວ, ເຊັ່ນຕົວຢ່າງ, ອາດຈະໄດ້ຮັບທຶນຮອນເພື່ອຊ່ວຍໃຫ້ເຂົາເຈົ້າສືບຕໍ່ໃຫ້ມີຄວາມກ້າວໜ້າໄປສູ່ລະດັບໂຮງຮຽນສອງດາວໄດ້. ໂຄງສ້າງຂອງການໃຫ້ລາງວັນດັ່ງກ່າວ ອາດຈະເນັ້ນໜັກໃສ່ການຊຸກຍູ້ໃຫ້ກຳລັງໃຈຄູ ແລະ ກຸ່ມນັກຮຽນ, ຜູ້ທີ່ເປັນໃຈກາງຂອງຜົນສຳເລັດຂອງແຜນງານ, ດ້ວຍການສະໜອງຫຼັກສູດຕ່າງໆ ຫຼື ແຮງຈູງໃຈທີ່ຄ້າຍຄືກັນ ເມື່ອຂີດໝາຍທີ່ວາງໄວ້ສາມາດບັນລຸໄດ້ ແລະ ມີຄວາມຍືນຍົງ.

## 3.3 ຄວາມສາມາດປັບປ່ຽນໄດ້ ແລະ ຄວາມແຕກຕ່າງ

ສະພາບການວາງແຜນງານ ແຕກຕ່າງກັນຢ່າງຫຼວງຫຼາຍໃນແຕ່ລະປະເທດ, ແລະ ຢູ່ຫຼາຍໆປະເທດເອງ ຍັງເຫັນວ່າມີຄວາມແຕກຕ່າງຢູ່ພາຍໃນປະເທດເຂົາເຈົ້າ. ດັ່ງນັ້ນ ຫຼັກການສາມດາວ ແມ່ນໄດ້ຮັບການອອກແບບ ເພື່ອປັບໃຊ້ໃຫ້ແທດເໝາະກັບຄວາມຈຳເປັນຂອງທ້ອງຖິ່ນ. ຄຳນິຍາມ ແລະ ໂຄງສ້າງຂອງໂຮງຮຽນໜຶ່ງດາວ ໂດຍລວມແມ່ນຂ້ອນຂ້າງຈະຄ້າຍຄືກັນໃນແຕ່ລະປະເທດ: ສາມກຸ່ມກິດຈະກຳ ສຳລັບສຸຂະອະນາໄມ, ສຸຂະພິບານ ແລະ ນ້ຳ ແມ່ນໃຈກາງສຳຄັນສຳລັບຫຼັກການສາມດາວ ແລະ ຄວນຈະເປັນສ່ວນໜຶ່ງຂອງແຜນງານທັງໝົດ. ເຖິງຢ່າງໃດກໍ່ຕາມ, ປະເທດຕ່າງໆອາດຈະຕ້ອງການປັບປ່ຽນໃຫ້ແທດເໝາະກັບສະພາບຄວາມຈຳເປັນຂອງທ້ອງຖິ່ນ, ເຊັ່ນ ການແນະນຳ ການບຳບັດນ້ຳ ໃນໄລຍະເປັນໂຮງຮຽນໜຶ່ງດາວ.

ຈຸດທີ່ສາມາດປັບປ່ຽນໄດ້ຫຼາຍທີ່ສຸດແມ່ນ ແມ່ນຈະກຳນົດລະດັບຂອງໂຮງຮຽນສອງດາວ ແລະ ໂຮງຮຽນສາມດາວແນວໃດ ເນື່ອງຈາກວ່າເປົ້າໝາຍຕ່າງໆຈະຂຶ້ນກັບມາດຕະຖານແຫ່ງຊາດ ແລະ ສະພາບການຂອງຕົວຈິງຂອງທ້ອງຖິ່ນ, ແລະ ຈະແຕກຕ່າງກັນໃນແຕ່ລະປະເທດ. ໃນໄລຍະຢູ່ຂັ້ນໂຮງຮຽນສອງດາວ, ເຊັ່ນຕົວຢ່າງ, ບາງປະເທດອາດຈະກຳນົດໃຫ້ມີສະຖານທີ່ລ້າງມືຢູ່ເຂດນອກຫ້ອງນ້ຳ, ເຊິ່ງໃນບາງປະເທດ ອາດຈະອີງໃສ່ໂຄງລ່າງທີ່ມີຢູ່ເດີມ ແຕ່ວ່າເນັ້ນໜັກໃສ່ສຸຂະສຶກສາຫຼາຍກວ່າ.

ປະເທດຕ່າງໆ ອາດຈະເລືອກທີ່ຈະເວັ້ນໄລຍະຢູ່ຂັ້ນໂຮງຮຽນສອງດາວ ແລະ ສາມດາວ ແລະ ໃຫ້ບູລິມະສິດໃນການກຳນົດຫຼາຍໆໂຮງຮຽນໜຶ່ງດາວເທົ່າທີ່ຈະເປັນໄປໄດ້ ເພື່ອເນັ້ນໜັກໃຫ້ມີການປ່ຽນແປງທີ່ຈຳເປັນສາມຢ່າງ ເພື່ອສົ່ງເສີມສຸຂະອະນາໄມ ແລະ ເຮັດໃຫ້ໂຮງຮຽນກາຍເປັນສະຖານທີ່ສົ່ງເສີມສຸຂະພາບທີ່ດີສຳລັບເດັກ. ໃນກໍລະນີນີ້ ຫຼັກການດັ່ງກ່າວ ອາດຈະເອີ້ນງ່າຍໆວ່າ ຫຼັກການດາວສຳລັບ WASH ໃນໂຮງຮຽນ’.

ບາງປະເທດ ອາດຈະຕ້ອງການນຳໃຊ້ຫຼັກການສາມດາວ ເພື່ອສົ່ງເສີມກິດຈະກຳທີ່ຕິດພັນກັບສຸຂະພາບໃນໂຮງຮຽນ, ເຊັ່ນ: ການຂ້າແມ່ທ້ອງ ຫຼື ການລິເລີ່ມເພື່ອຮັກສາອະນາໄມຊ່ອງປາກ, ເຊັ່ນດຽວກັນກັບໂຄງການສຸຂະພາບດີໃນໂຮງຮຽນ. ການຕັດສິນໃຈວ່າ ຈະລວມເອົາອັນໃດເຂົ້ານຳ ແມ່ນຈະຕ້ອງແມ່ນການຕັດສິນໃຈລະດັບປະເທດ ແລະ ຄວນຈະອີງໃສ່ຄວາມຈຳເປັນ ແລະ ຫຼັກຖານ.

### ການໃຫ້ລາງວັນໃນການແຂ່ງຂັນແຮງຈູງໃຈ ແລະ ຜົນງານຢູ່ອິນເດຍ

ມີຫຼາຍໆລັດຢູ່ອິນເດຍ ນຳໃຊ້ການແຂ່ງຂັນ ເພື່ອເປັນການຮັບຮູ້ ແລະ ໃຫ້ລາງວັນໂຮງຮຽນຕ່າງໆ ທີ່ສາມາດຮັກສາມາດຕະຖານທີ່ເປັນມິດຕໍ່ເດັກ, ລວມທັງ ຂໍ້ກຳນົດໝາຍທີ່ຕິດພັນກັບ WASH. ໂຮງຮຽນທີ່ຊະນະການແຂ່ງຂັນ ໄດ້ຮັບລາງວັນເປັນເງິນສົດ, ຂັນລາງວັນ ແລະ ໃບຢັ້ງຢືນ.

ໃນລັດບັງກາລຕາເວັນຕົກ - ທີ່ກົມການສຶກສາ ໄດ້ນຳໃຊ້ແຜນງານ WASH ໃນໂຮງຮຽນ ເປັນເຄື່ອງມືເພື່ອການປະຕິບັດຕາມ ກົດໝາຍແຫ່ງຊາດ ວ່າດ້ວຍສິດທິໃນການສຶກສາ - ລາງວັນປະຈຳປີ ແມ່ນໄດ້ມອບໃຫ້ແກ່ໂຮງຮຽນປະຖົມທີ່ບົວລະບັດຮັກສາສິ່ງອຳນວຍຄວາມສະດວກຂອງ WASH ແລະ ຊຸກຍູ້ສົ່ງເສີມວິທີການທີ່ຖືກຫຼັກສຸຂະອະນາໄມ. ການແຂ່ງຂັນດັ່ງກ່າວ ເປັນທີ່ນິຍົມຫຼາຍທີ່ໃນວ່າງມໍ່ໆມານີ້ ມັນໄດ້ຮັບການຂະຫຍາຍອອກໄປເຖິງໂຮງຮຽນຊັ້ນມັດທະຍົມ ແລະ ລາງວັນເງິນສົດ ແມ່ນໄດ້ຮັບການເພີ່ມຈຳນວນສູງຂຶ້ນ.

ຜູ້ສັງເກດການ ໄດ້ສັງເກດວ່າ ການແຂ່ງຂັນດັ່ງກ່າວ ໄດ້ພາໃຫ້ມີການປັບປຸງເງື່ອນໄຂຕ່າງໆໃນໂຮງຮຽນ, ເພີ່ມການລ້າງມື ແລະ ການເຂົ້າຮ່ວມຂອງເດັກຫຼາຍຂຶ້ນ ໃນການບົວລະບັດຮັກສາສະພາບແວດລ້ອມທີ່ດີຕໍ່ສຸຂະພາບໃນໂຮງຮຽນ. ມັນຍັງໄດ້ເປັນການກະຕຸ້ນລະບົບການໃຫ້ຄຳປຶກສາທີ່ບໍ່ເປັນທາງການລະຫວ່າງໂຮງຮຽນ, ໂດຍໂຮງຮຽນທີ່ຊະນະເລີດ ຈະໃຫ້ຄຳແນະນຳແກ່ໂຮງຮຽນທີ່ຢູ່ໃກ້ຄຽງ ກ່ຽວກັບຍຸດທະສາດ ແລະ ວິທີການປະຕິບັດ ເພື່ອເພີ່ມໂອກາດໃຫ້ແກ່ພວກເຂົາເຈົ້າໃນການຄວ້າລາງວັນຊະນະເລີດໃນປີຖັດໄປ.

*Source*: UNICEF India, ‘School Awards for Child Friendly Norms & Standards’, West Bengal, 2012.

ຖ້າ, ເຊັ່ນຕົວຢ່າງ, ແມ່ທ້ອງໂຕກົມທີ່ຕິດຕໍ່ທາງດິນ ແມ່ນບັນຫາໃຫຍ່ທີ່ສຸດໃນປະເທດ ຫຼື ພາກພື້ນ, ມັນອາດຈະມີເປັນການດີທີ່ຈະເຊື່ອມໂຍງກິດຈະກຳການຂ້າແມ່ທ້ອງ ເຂົ້າໃນການອອກແບບຫຼັກການດັ່ງກ່າວໃນລະດັບທ້ອງຖິ່ນ.

ໃນທຸກໆກໍລະນີ, ນອກເໜືອຈາກຫຼັກການສາມດາວ ກໍ່ຄວນເອົາໃຈໃສ່: ມີຫຼາຍອົງປະກອບເກີນໄປທີ່ອາດຈະຄອບງຳຫຼັກການດັ່ງກ່າວ ແລະ ຈະເຈືອຈາງຈຸດປະສົງຕົ້ນຕໍຂອງຫຼັກການໃນການປັບປຸງວິທີການທີ່ຖືກຫຼັກອະນາໄມ ແລະ ສະພາບແວດລ້ອມໃນໂຮງຮຽນ. ຄວາມລຽບງ່າຍ, ຄວາມສາມາດໃນການຜົນຂະຫຍາຍ ແລະ ຄວາມຍືນຍົງ ແມ່ນໝາກຫົວໃຈຂອງຫຼັກການສາມດາວ.



# 4.0 ສະຫຼຸບ

ການນຳໃຊ້ຫຼັກການສາມດາວ ສຳລັບແຜນງານ WASH ໃນໂຮງຮຽນ ຈະຊ່ວຍປັບປຸງປະສິດທິຜົນຂອງແຜນງານການປ່ຽນແປງພຶດຕິກຳໃນການຮັກສາອະນາໄມ, ພ້ອມດຽວກັນນັ້ນກໍ່ຮັບປະກັນວ່າ ໂຮງຮຽນສາມາດປະຕິບັດໄດ້ຕາມເງື່ອນໄຂສຳຄັນ ເພື່ອສ້າງ ແລະ ຮັກສາສະພາບແວດລ້ອມທີ່ດີຕໍ່ສຸຂະພາບສຳລັບນັກຮຽນ. ດ້ວຍການແກ້ໄຂບັນຫາຂອດຄ້າງຄາທີ່ກີດຂວາງການຈັດຕັ້ງປະຕິບັດແຜນງານ WASH ໃນໂຮງຮຽນ ໃນປະຈຸບັນ ແລະ ການນຳໃຊ້ບົດຮຽນທີ່ຖອດຖອນໄດ້ຈາກຜົນສຳເລັດໃນການເຮັດວຽກພາກສະໜາມຕົວຈິງ, ບັນດາປະເທດຕ່າງໆສາມາດຊ່ວຍຮັບປະກັນວ່າ ທຸກໆສິດທິຂອງເດັກໃນການມີນ້ຳຊົມໃຊ້, ສຸຂະອະນາໄມ ແລະ ຄວາມສະອາດ ແມ່ນໄດ້ຮັບການເຕີມເຕັມ.

ຫຼັກການສາມດາວ ແມ່ນບົນພື້ນຖານຂີດຄວາມສາມາດ ແລະ ຊັບພະຍາກອນທ້ອງຖິ່ນທີ່ມີຢູ່ຂອງໂຮງຮຽນ ແລະ ຊຸມຊົນ ໃນຂະນະດຽວກັນກໍ່ນຳໃຊ້ປະໂຫຍດຈາກຄວາມກະຕືລືລົ້ນ ແລະ ພະລັງງານຂອງເດັກ ໂດຍຜ່ານກິດຈະກຳກຸ່ມສຳລັບສຸຂະອະນາໄມ, ຄວາມສະອາດ ແລະ ນ້ຳ. ກິດຈະກຳປະຈຳວັນຂອງກຸ່ມນັກຮຽນນີ້ ຊ່ວຍໃຫ້ເດັກສ້າງອຸປະນິໄສທີ່ຖືກສຸຂະລັກສະນະ ທີ່ຈະຕິດໂຕເຂົາເຈົ້າໄປຕະຫຼອດຊີວິດ.

ດ້ວຍການຈັດລຽງບູລິມະສິດຂອງການປະຕິບັດການທີ່ຈຳເປັນທີ່ສຸດເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ, ຫຼັກການສາມດາວ ຊ່ວຍໃຫ້ໂຮງຮຽນເນັ້ນໜັກໃສ່ການຕອບສະໜອງຕາມຄວາມຕ້ອງການຂອງເດັກ ໂດຍຜ່ານກິດຈະກຳທີ່ສຳຄັນຕ່າງໆ. ໃນເວລາດຽວກັນ, ມັນຍັງຊ່ວຍໃຫ້ເປັນແນວທາງທີ່ຈະແຈ້ງສຳລັບທຸກໆໂຮງຮຽນໃນທົ່ວປະເທດ ໃຫ້ສາມາດປະຕິບັດຕາມມາດຕະຖານແຫ່ງຊາດ, ແລະ ສຳລັບນັກຮຽນທຸກຄົນ ໃຫ້ມີໂຮງຮຽນທີ່ສົ່ງເສີມສຸຂະອະນາໄມ ແລະ ສຸຂະພາບທີ່ດີຂອງເດັກ.



# **ເອກະສານຊ້ອນທ້າຍ i.** ການວິເຄາະບັນຫາຂອດຄ້າງຄາຂອງແຜນງານ WASH ໃນໂຮງຮຽນ

ເດັກທຸກຄົນ ມີສິດໃນການໄດ້ຮັບນໍ້າ ແລະ ສຸຂະພິບານຢ່າງເທົ່າທຽມກັນ, ລວມທັງໃນເວລາຢູ່ໂຮງຮຽນ. ອັນນີ້ເປັນເຫດຜົນພຽງພໍທີ່ຕ້ອງຈັດລຽງບູລິມະສິດ, ທຶນ ແລະ ປັບປຸງແຜນງານ  WASH ໃນໂຮງຮຽນຢູ່ທຸກໆບ່ອນ. ກໍລະນີດັ່ງກ່າວ ແມ່ນຈະເຮັດໃຫ້ມີຄວາມເຂັ້ມແຂງຍິ່ງຂຶ້ນ ດ້ວຍການເຮັດໃຫ້ຫຼັກຖານການເຊື່ອມໂຍງລະຫວ່າງນໍ້າ, ສຸຂະພິບານ ແລະ ສຸຂະສຶກສາ ໃນໂຮງຮຽນ ກັບ ສຸຂະພາບຂອງເດັກ ແລະ ຜົນການຮຽນຂອງເດັກ ມີຄວາມຊັດເຈນຍິ່ງຂຶ້ນ.

## *ແຜນງານ WASH ໃນໂຮງຮຽນ ພາໃຫ້ເດັກມີສຸຂະພາບແຂງແຮງຂຶ້ນ*

ເດັກນັກຮຽນໃຊ້ເວລາສ່ວນໃຫຍ່ໃນແຕ່ລະວັນຢູ່ໂຮງຮຽນ. ພວກເຂົາເບິ່ງຄືວ່າຈະບໍ່ຄ່ອຍເຈັບປ່ວຍຈາກພະຍາດຖອກທ້ອງ ແລະ ພະຍາດອື່ນໆທີ່ຕິດພັນກັບບັນຫາສຸຂະອະນາໄມ ຖ້າຫາກໂຮງຮຽນຂອງພວກເຂົາເຈົ້າ ມີແຜນງານລ້າງມືຢ່າງມີປະສິດທິຜົນ, ມີສຸຂະພິບານ ແລະ ນໍ້າດື່ມທີ່ສະອາດປອດໄພຢ່າງພຽງພໍ.[9] ຄອບຄົວກໍ່ເບິ່ງຄືວ່າບໍ່ຄ່ອຍມີການເຈັບປ່ວງ ເມື່ອເດັກນ້ອຍມີສຸຂະພາບແຂງແຮງ: ການສຶກສາຕ່າງໆສະແດງໃຫ້ເຫັນວ່າ ພະຍາດຕິດຕໍ່ຢູ່ໂຮງຮຽນ ສາມາດແຜ່ເຊື້ອໄປໃຫ້ສະມາຊິກໃນຄອບຄົວໄດ້ເຖິງເຄິ່ງໜຶ່ງ.[10]

ວິທີທີ່ສຳຄັນທີ່ສຸດທີ່ໂຮງຮຽນຈະມີຜົນຕໍ່ສຸຂະພາບຂອງເດັກ ແມ່ນການສົ່ງເສີມພຶດຕິກຳທີ່ຖືກຫຼັກອະນາໄມທີ່ດີຂອງເດັກ ໂດຍຜ່ານສຸຂະສຶກສາ ແລະ ດ້ວຍການລ້າງມືດ້ວຍສະບູໃນແຕ່ລະວັນ ເຊິ່ງເປັນສ່ວນໜຶ່ງຂອງກິດຈະກຳປະຈຳວັນໃນໂຮງຮຽນ. ເມື່ອໂຮງຮຽນມີຄວາມຄຸ້ນເຄີຍກັບອຸປະນິໄສທີ່ດີຕໍ່ສຸຂະພາບຢູ່ໃນໂຮງຮຽນ, ພຶດຕິກຳເຫຼົ່ານັ້ນຈະຝັງແໜ້ນໃນໂຕຂອງເຂົາເຈົ້າ ແລະ ຈະຢູ່ກັບເຂົາເຈົ້າໄປຕະຫຼອດຊີວິດ.[11] ເດັກຍັງສາມາດເຮັດໜ້າທີ່ເປັນຕົວກະຕຸ້ນໃຫ້ມີການປ່ຽນແປງ, ໂນ້ມນ້າວເອື້ອຍອ້າຍນ້ອງ ແລະ ພໍ່ແມ່ຂອງເຂົາເຈົ້າ ໃຫ້ປ່ຽນແປງພຶດຕິກຳດ້ານສຸຂະອະນາໄມໃຫ້ຖືກຕ້ອງ,[12] ແລະ ຈົນເຖິງການເຮັດໜ້າທີ່ເປັນຕົວກະຕຸ້ນສຳລັບການເລືອກນຳໃຊ້ສິ່ງອຳນວຍຄວາມສະດວກດ້ານສຸຂະພິບານທີ່ໄດ້ມາດຖານຢູ່ໃນຊຸມຊົນຂອງພວກເຂົາເຈົ້າອີກດ້ວຍ.[13]

## *ແຜນງານ WASH ໃນໂຮງຮຽນ ພາໃຫ້ຜົນການຮຽນດີຂຶ້ນ, ໂດຍສະເພາະສຳລັບເດັກຍິງ*

ໃນຫຼາຍໆປະເທດທີ່ກຳລັງພັດທະນາ, ລະດັບຄວາມສ່ຽງຂອງເດັກຕໍ່ກັບພະຍາດທີ່ຕິດພັນກັບສຸຂະອະນາໄມ ແມ່ນປັດໃຈສຳຄັນທີ່ສຸດຕໍ່ໂອກາດຂອງຜົນສຳເລັດໃນໂຮງຮຽນ ແລະ ໃນອະນາຄົດ. ນັກຮຽນໃນໄວເຂົ້າໂຮງຮຽນ ທີ່ໄດ້ຮັບຜົນກະທົບຈາກພະຍາດທີ່ຕິດພັນກັບສຸຂະອະນາໄມ ແມ່ນມີຄວາມເປັນໄປໄດ້ຫຼາຍກວ່າທີ່ຈະມີປະສົບການຂາດຮຽນຕິດຕໍ່ກັນ. ອົງການອະນາໄມໂລກ ປະເມີນວ່າ 272 ລ້ານມື້ເຂົ້າໂຮງຮຽນ ແມ່ນຖືກສູນເສຍໄປໃນແຕ່ລະປີ ເນື່ອງຈາກພະຍາດຖອກທ້ອງພຽງຢ່າງດຽວ.[14] ການສຶກສາຕ່າງໆຍັງສະແດງໃຫ້ເຫັນວ່າ ການລ້າງມືດ້ວຍສະບູ ໃນໂຮງຮຽນປະຖົມ ຊ່ວຍຫຼຸດຜ່ອນອັດຕາການຂາດຮຽນໄດ້ລະຫວ່າງ 20 ສ່ວນຮ້ອຍ ແລະ 54 ສ່ວນຮ້ອຍ *(ເບິ່ງຕາຕະລາງຂ້າງລຸ່ມ).*

ນໍ້າດື່ມຢູ່ໂຮງຮຽນ ຍັງເປັນສິ່ງສຳຄັນທີ່ສຸດເຊັ່ນກັນ: ການສຶກສາຕ່າງໆສະແດງໃຫ້ເຫັນວ່າ ເດັກທີ່ບໍ່ດື່ມນໍ້າພຽງພໍຢູ່ຮຽນຮຽນ ຈະມີພາວະຂາດນໍ້າ, ເຊິ່ງຈະກະທົບຕໍ່ຂີດຄວາມສາມາດໃນການຮຽນຮູ້ ແລະສະຕິປັນຍາຂອງເຂົາເຈົ້າ.[15]

### ການລ້າງມື ແລະ ການຂາດໂຮງຮຽນ: ເຮັດຕາມແຜນທີ່ວາງໄວ້

ຕົວຢ່າງຂອງການຫຼຸດຜ່ອນການຂາດໂຮງຮຽນໃນການສຶກສາ ແລະ ໂຄງການຕ່າງໆໃນທົ່ວໂລກ ລວມມີ

| | |
|---|---|
| **54%** | ການຫຼຸດຜ່ອນ ດ້ວຍການສົ່ງເສີມການລ້າງມື ແລະ ການສະໜອງສະບູ່ລ້າງມື ໃນໂຮງຮຽນເປົ້າໝາຍ ຢູ່ຈີນ[16] |
| **40%** | ຕົວຢ່າງຂອງການຫຼຸດຜ່ອນໂດຍການລ້າງມືສອງຄັ້ງຕໍ່ມື ໃນໂຮງຮຽນປະຖົມ 30 ແຫ່ງ ຢູ່ປະເທດອີຢິບ[17] |
| **35%** | ຕົວຢ່າງຂອງການຫຼຸດຜ່ອນການຂາດໂຮງຮຽນ ໂດຍຜ່ານການລ້າງມື ແລະ ການສະໜອງນໍ້າທີ່ສະອາດປອດໄພ ຢູ່ປະເທດເຄນຢ່າ[18] |
| **27%** | ຕົວຢ່າງຂອງການຫຼຸດຜ່ອນໂດຍການລ້າງມືທຸກມື້, ການຂ້າແມ່ທ້ອງ ແລະ ອະນາໄມຊ່ອງປາກ ໃນປະເທດຟີລິບປິນ[19] |
| **20%** | ຕົວຢ່າງຂອງການຫຼຸດໃນກຸ່ມນັກຮຽນທີ່ລາຍງານວິທີການລ້າງມືຢ່າງຖືກຕ້ອງ ຢູ່ປະເທດ ໂຄລຳເບຍ[20] |

ສ່ວນຫຼາຍ ເດັກຍິງຂາດໂຮງຮຽນຍ້ອນວ່າພວກເຂົາເຈົ້າ ຕ້ອງແບກຫາກວຽກເຮືອນຫຼາຍທີ່ສຸດ, ເຊັ່ນ ການຂົນນໍ້າ[21] ຫຼື ເບິ່ງແຍງນ້ອງທີ່ບໍ່ສະບາຍ, ສ່ວນໃຫຍ່ແມ່ນຍ້ອນພະຍາດຖອກທ້ອງ ຫຼື ພະຍາດອື່ນໆທີ່ຕິດພັນກັບ WASH. ເຢົາວະຊົນຍິງສ່ວນຫຼາຍ ແມ່ນພັກຢູ່ເຮືອນໃນໄລຍະມີປະຈຳເດືອນ ຍ້ອນຄວາມເຊື່ອ ແລະ ທຳນຽມປະຕິບັດທາງສັງຄົມ ແລະ ວັດທະນະທຳ, ການຂາດແຄນຜ້າອະນາໄມ, ຫຼື ຍ້ອນວ່າບໍ່ມີຫ້ອງນໍ້າທີ່ແຍກຍິງ-ຊາຍ ຫຼື ສະຖານທີ່ຊຳລະລ້າງທີ່ເປັນສ່ວນຕົວຢູ່ໂຮງຮຽນ. ໃນບາງບ່ອນ, ສິ່ງອຳນວຍຄວາມສະດວກດ້ານສຸຂະພິບານທີ່ໄດ້ຮັບການອອກແບບ ແລະ ວາງທີ່ຕັ້ງບໍ່ເໝາະສົມ ອາດຈະປະກອບສ່ວນໃຫ້ມີການລະເມີດທາງເພດ ແລະ ຄວາມຮຸນແຮງໃນໂຮງຮຽນໃນລະດັບສູງ.

## ເອກະສານຊ້ອນທ້າຍ ii. ອັດຕາກຸ້ມກວມທົ່ວໂລກຂອງແຜນງານ WASH ໃນໂຮງຮຽນ

ຄວາມສຳຄັນຂອງແຜນງານ WASH ໃນໂຮງຮຽນ ແມ່ນໄດ້ຮັບການຮັບຮູ້ເພີ່ມຂຶ້ນໂດຍຄູ່ຮ່ວມງານໃນຂະແໜງ WASH, ການສຶກສາ ແລະ ສຸຂະພາບ ພາຍໃນລັດຖະບານ ແລະ ອົງການສະໜັບສະໜູນຈາກພາຍນອກ. ລັດຖະບານ ແລະ ຄູ່ຮ່ວມພັດທະນາ ໄດ້ເສີມສ້າງຈຸດສຸມຂອງຕົນໃຫ້ເຂັ້ມແຂງໃສ່ແຜນງານ WASH ໃນໂຮງຮຽນ ແລະ ໄດ້ຂະຫຍາຍແຜນງານໃຫ້ກວ້າງຂວາງອອກ, ແລະ ຄວາມພະຍາຍາມເຫຼົ່ານີ້ ແມ່ນກຳລັງສ້າງຜົນຮັບທີ່ດີ. ແຜນງານລິເລີ່ມ WASH ໃນໂຮງຮຽນແມ່ນເຂົ້າເຖິງຫຼາຍໝື່ນໂຮງຮຽນ ໂດຍຜ່ານແຜນງານທີ່ໄດ້ຮັບການສະໜັບສະໜູນຈາກອົງການ UNICEF.

ນອກເໜືອຈາກຄວາມພະຍາຍາມນີ້, ຫຼາຍໆໂຮງຮຽນ ໃນປະເທດທີ່ກຳລັງພັດທະນາ ບໍ່ໄດ້ມີແມ່ນກະທັ້ງພື້ນຖານສິ່ງອຳນວຍຄວາມສະດວກດ້ານນ້ຳ ແລະ ສຸຂະອະນາໄມ. ຂໍ້ມູນທີ່ອົງການ UNICEF ໄດ້ເກັບກຳ ສະແດງໃຫ້ເຫັນວ່າ ໜ້ອຍກວ່າເຄິ່ງໜຶ່ງຂອງໂຮງຮຽນທັງໝົດໃນບັນດາປະເທດດ້ອຍພັດທະນາ ແລະ ບັນດາປະເທດທີ່ມີລາຍໄດ້ຕໍ່າ ມີນ້ຳ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂະພິບານທີ່ພຽງພໍ, ແລະ ບາງໂຮງຮຽນ ບໍ່ມີສິ່ງອຳນວຍຄວາມສະດວກເຫຼົ່ານັ້ນຈັກໜ້ອຍເລີຍ.[22] ແລະ ສິ່ງທ້າທາຍທີ່ແທ້ຈິງ ແມ່ນຍິ່ງໃຫຍ່ກວ່າຈຳນວນຕົວເລກທີ່ສະເໜີນັ້ນ. ຂໍ້ມູນຂອງໂລກ ບໍ່ໄດ້ລວມເອົາຂໍ້ມູນກ່ຽວກັບວ່າ ສິ່ງອຳນວຍຄວາມສະດວກດ້ານສຸຂະພິບານເຫຼົ່ານັ້ນ ແມ່ນຖືກຕາມມາດຕະຖານຂັ້ນຕ່ຳຫຼືບໍ່ ເຊັ່ນ: ອັດຕາສ່ວນຂອງນັກຮຽນຕໍ່ຫ້ອງນ້ຳ, ຫ້ອງນ້ຳແຍກຍິງ-ຊາຍ ແລະ ຄວາມເປັນສ່ວນຕົວ; ບໍ່ໄດ້ເບິ່ງວ່າມີບ່ອນລ້າງມືໃສ່ສະບູຫຼືບໍ່; ມີສຸຂະສຶກສາທີ່ສອນໃນໂຮງຮຽນຫຼືບໍ່; ຫຼື ບໍ່ວ່ານ້ຳ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂະພິບານ ແມ່ນໃຊ້ງານໄດ້ຫຼືບໍ່.

ຂໍ້ມູນທີ່ມີຢູ່ ຊີ້ໃຫ້ເຫັນວ່າ ເຖິງແມ່ນຈະມີສິ່ງອຳນວຍຄວາມສະດວກດັ່ງກ່າວແລ້ວກໍ່ຕາມ ມັນອາດຈະຢູ່ໃນສະພາບທີ່ບໍ່ດີ. ຂໍ້ມູນໃນວ່າງມໍ່ໆມານີ້ທີ່ເກັບກຳຈາກເຂດອາຊີໃຕ້, ເຊັ່ນຕົວຢ່າງ, ສະແດງໃຫ້ເຫັນລະຫວ່າງໜຶ່ງສ່ວນສີ່ ຫຼື ໜຶ່ງສ່ວນສາມຂອງສິ່ງອຳນວຍຄວາມສະດວກຂອງ WASH ໃນໂຮງຮຽນ ແມ່ນບໍ່ສາມາດໃຊ້ງານໄດ້.[23] ໂດຍລວມແລ້ວ, ມີຄວາມຈຳເປັນຢ່າງຈະແຈ້ງທີ່ຕ້ອງໄດ້ປັບປຸງອັດຕາກຸ້ມກວມຂອງ WASH ໃນໂຮງຮຽນ, ໂດຍມີວິທີທາງອອກທີ່ນອກເໜືອຈາກການເພີ່ມທຶນຮອນ ເພື່ອກວມເອົາການນຳໃຊ້ຊັບພະຍາກອນທີ່ມີຢູ່ແຕ່ເດີມໃຫ້ມີປະສິດທິຜົນກວ່າເດີມ.

### ອັດຕາກຸ້ມກວມຂອງໂຮງຮຽນທີ່ມີນ້ຳຊົມໃຊ້, ຄ່າສະເລ່ຍທົ່ວໂລກ




% ຂອງໂຮງຮຽນທີ່ມີສິ່ງອຳນວຍຄວາມສະດວກດ້ານນ້ຳທີ່ພຽງພໍ, ຕົວເລກສະເລ່ຍຈາກ ແຜນງານ 130 ປະເທດ, ລວມທັງ 53 ປະເທດດ້ອຍພັດທະນາ ແລະ ປະເທດທີ່ມີລາຍໄດ້ຕ່ຳ

### ອັດຕາກຸ້ມກວມຂອງໂຮງຮຽນທີ່ມີສຸຂະພິບານ, ຄ່າສະເລ່ຍທົ່ວໂລກ




% ຂອງໂຮງຮຽນທີ່ມີສິ່ງອຳນວຍຄວາມສະດວກດ້ານສຸຂະພິບານທີ່ພຽງພໍ, ຕົວເລກສະເລ່ຍຈາກແຜນງານ 126 ປະເທດ, ລວມທັງ 52 ປະເທດດ້ອຍພັດທະນາ ແລະ ປະເທດທີ່ມີລາຍໄດ້ຕ່ຳ

## **ເອກະສານຊ້ອນທ້າຍ iii.** ການວິເຄາະບັນຫາຂອດຄ້າງຄາຂອງແຜນງານ WASH ໃນໂຮງຮຽນ

ອົງການ UNICEF ນໍາໃຊ້ການວິເຄາະບັນຫາທີ່ເປັນຂອດຄ້າງຄາ ໃນການປະເມີນປະສິດທິຜົນຂອງການສະໜັບສະໜູນຂອງຕົນ ຕໍ່ກັບແຜນງານແຫ່ງຊາດຂອງ WASH ໃນໂຮງຮຽນ. ຂັ້ນຕອນດັ່ງກ່າວ ຊ່ວຍໃຫ້ສາມາດກໍານົດອຸປະສັກທີ່ເປັນຈຸດສໍາຄັນ (ຂອດຄ້າງຄາ) ທີ່ກີດຂວາງຄວາມພະຍາຍາມໃນການຂະຫຍາຍແຜນງານ WASH ໃນໂຮງຮຽນ.

ດັ່ງເປັນສ່ວນໜຶ່ງຂອງກອບວຽກ ສໍາລັບການວິເຄາະບັນຫາທີ່ເປັນຂອດຄ້າງຄາ, ສີ່ແຜນງານທີ່ໄດ້ຈັດເປັນສີ່ປະເພດກວ້າງໆມີ: (1) ສະພາບແວດລ້ອມທີ່ເອື້ອອໍານວຍ (ນະໂຍບາຍ, ນິຕິກໍາ ແລະ ການເງິນ); (2) ອຸປະທານ (ຊັບພະຍາກອນມະນຸດ ແລະ ຊັບພະຍາກອນທາງກາຍະພາບໃນໂຮງຮຽນ, ລວມທັງສິ່ງອໍານວຍຄວາມສະດວກ ແລະ ການຝຶກອົບຮົມສໍາລັບຄູ); (3) ອຸປະສົງ (ສະແດງໃຫ້ເຫັນເຖິງແຮງຈູງໃຈຂອງໂຮງຮຽນຊຸມຊົນໃນການສະໜອງທຶນຮອນ ແລະ ຄຸ້ມຄອງຊັບພະຍາກອນດ້ານ WASH ໃນໂຮງຮຽນ); ແລະ (4) ຄຸນນະພາບ (ປະສິດທິຜົນຂອງປັດໃຈເພື່ອປ່ຽນແປງພຶດຕິກໍາດ້ານສຸຂະອະນາໄມ).

ພ້ອມກັນກັບການນໍານົດບັນຫາທີ່ເປັນຂອດຄ້າງຄາ, ຈຸດປະສົງຂອງການວິເຄາະ ແມ່ນເພື່ອກໍານົດຂົງເຂດແຜນງານທີ່ມີຄວາມຄືບໜ້າຂ້ອນຂ້າງດີ. ອັນນີ້ຈະຊ່ວຍໃຫ້ລັດຖະບານ ແລະ ຜູ້ຈັດການຂອງອົງການສະໜັບສະໜູນ ສາມາດໝູນໃຊ້ຊັບພະຍາກອນທີ່ມີຢູ່ ແລະ ວາງເປົ້າໝາຍໃໝ່ໃນການນໍາໃຊ້ຊັບພະຍາກອນໃຫ້ເຂົ້າເຖິງຂົງເຂດອື່ນໆທີ່ຍັງບໍ່ມີຄວາມຄືບໜ້າ.

ເຖິງແມ່ນວ່າສະຖານະການໃນແຕ່ລະປະເທດຈະມີລັກສະນະສະເພາະ - ແລະ, ຕາມຫຼັກການແລ້ວ, ແຕ່ລະປະເທດ ຄວນຈະດໍາເນີນການວິເຄາະຂອງຕົນເອງ - ການຮວບຮວມເອົາຜົນຮັບແບບໄວທີ່ເກັບກັບໂດຍອົງການ UNICEFໃນບັນດາປະເທດຕ່າງໆ ທີ່ໄດ້ດໍາເນີນການວິເຄາະບັນຫາທີ່ເປັນຂອດຄ້າງຄາ ເນັ້ນໃຫ້ເຫັນຂົງເຂດຫຼັກຂອງບັນຫາທີ່ໜ້າເປັນຫ່ວງສໍາລັບການຂະຫຍາຍແຜນງານ WASH ໃນໂຮງຮຽນ, ດັ່ງທີ່ສະແດງໃຫ້ເຫັນຢູ່ຕາຕະລາງໜ້າ 25.

ການວິເຄາະບັນຫາທີ່ເປັນຂອດຄ້າງຄາ ສະແດງໃຫ້ເຫັນວ່າ ບັນຫາທີ່ສໍາຄັນສ່ວນໃຫຍ່ ແມ່ນຂີດຄວາມສາມາດຂອງແຜນງານປະຈຸບັນຂອງ WASH ໃນໂຮງຮຽນ ເພື່ອສົ່ງເສີມການປ່ຽນແປງພຶດຕິກໍາການລ້າງມືໃນກຸ່ມນັກຮຽນ. ສຸຂະສຶກສາ ແມ່ນບໍ່ໄດ້ຮັບການຈັດຕັ້ງຢ່າງສະໝໍ່າສະເໝີໃນໂຮງຮຽນສ່ວນໃຫຍ່, ແລະ ໃນບ່ອນທີ່ມີແຜນງານແລ້ວ, ແຜນງານດັ່ງກ່າວສ່ວນຫຼາຍປະສິດທິຜົນຍັງຈໍາກັດຫຼາຍ. ຂໍ້ມູນຂອງໂລກກ່ຽວກັບການປະຕິບັດດ້ານສຸຂະອະນາໄມຂອງເດັກນັກຮຽນ ແມ່ນສ່ວນໃຫຍ່ບໍ່ມີ, ແຕ່ວ່າການສຶກສາແຕ່ລະຢ່າງ ຢັ້ງຢືນວ່າ ອັດຕາຂອງການລ້າງມືໃສ່ສະບູແມ່ນຍັງຕໍ່າຫຼາຍ, ໃນບາງກໍລະນີແມ່ນຕໍ່າກວ່າ 5 ສ່ວນຮ້ອຍ.[24]

ການວິເຄາະບັນຫາທີ່ເປັນຂອດຄ້າງຄາ ຍັງສະແດງໃຫ້ເຫັນວ່າ ແຜນງານຕ່າງໆໂດຍລວມແລ້ວແມ່ນບໍ່ໄປຕາມເປົ້າໝາຍທີ່ຄາດໄວ້ ໃນດ້ານການອະນາໄມ ແລະ ບົວລະບັດຮັກສາຂອງສິ່ງອໍານວຍຄວາມສະດວກຫ້ອງນໍ້າໃນໂຮງຮຽນ. ອັນນີ້ແມ່ນສໍາຄັນ ເພາະວ່າການບົວລະບັດຮັກສາບໍ່ໄດ້ດີຈະພາໃຫ້ມີການເປ່ເພ ແລະ ເພາະວ່າຫຼັກຖານສະແດງໃຫ້ເຫັນວ່າ ເດັກນັກຮຽນ ແມ່ນຈະບໍ່ຄ່ອຍນໍາໃຊ້ຫ້ອງນໍ້າຖ້າຫາກຫ້ອງນໍ້າບໍ່ສະອາດ.[25] ອັນນີ້ ແມ່ນບັນຫາທີ່ຕິດພັນກັບຄວາມຕ້ອງການ: ການບົວລະບັດຮັກສາ ແລະ ການອະນາໄມ ແມ່ນຄວາມຮັບຜິດຊອບຂອງທ້ອງຖິ່ນ, ເຊິ່ງຈະໄດ້ດໍາເນີນໄປຢ່າງເໝາະສົມກໍ່ຕໍ່ສິ່ງອໍານວຍຄວາມສະດວກ WASH ໃນໂຮງຮຽນ ໄດ້ເຫັນວ່າມີຄຸນຄ່າ (ເປັນທີ່ຕ້ອງການ) ໂດຍຜູ້ບໍລິຫານໂຮງຮຽນ, ຄູ ແລະ ຊຸມຊົນເຈົ້າພາບ: ລະບົບການສຶກສາແຫ່ງຊາດ ສ່ວນໃຫຍ່ມີຄວາມລົ້ມເຫຼວໃນການສະໜອງສະບູໃຫ້ແກ່ໂຮງຮຽນ. ແຕ່ວ່າ ດ້ວຍການສະໜັບສະໜູນຈາກຊຸມຊົນ ແລະ ລັດຖະບານທ້ອງຖິ່ນ, ໂຮງຮຽນສາມາດແນ່ໃຈວ່າ ຈະມີສະບູທີ່ສາມາດຊອກຫາໄດ້ໃນທ້ອງຖິ່ນສະໜອງໃຫ້ຢ່າງຕໍ່ເນື່ອງເພື່ອໃຊ້ລ້າງມື.

ງົບປະມານແຫ່ງຊາດ ສໍາລັບ WASH ໃນໂຮງຮຽນ ຍັງໄດ້ຮັບການກໍານົດ ວ່າເປັນຂົງເຂດທີ່ໜ້າເປັນຫ່ວງ ພາຍໃຕ້ການວິເຄາະບັນຫາທີ່ເປັນຂອດຄ້າງຄາ. ເຖິງຢ່າງໃດກໍ່ຕາມ, ອັນນີ້ແມ່ນການສ່ອງແສງໃຫ້ເຫັນເຖິງວິທີການທີ່ແຜນງານແຫ່ງຊາດຂອງ WASH ໃນໂຮງຮຽນ ໄດ້ຮັບການອອກແບບ ໂດຍມີຈຸດສຸມໃສ່ປັດໃຈອົງປະກອບດ້ານອຸປະກອນທີ່ມີລາຄາແພງ. ການວິເຄາະໃນລະດັບໂຮງຮຽນ ສະແດງໃຫ້ເຫັນວ່າ ອຸປະກອນ ແມ່ນບໍ່ໄດ້ຖືກກໍານົດວ່າເປັນຄວາມຕ້ອງການທີ່ໃຫຍ່ຫຼວງແຕ່ປະການໃດ.

ເພື່ອຂະຫຍາຍແຜນງານແຫ່ງຊາດໃຫ້ກວ້າງຂວາງ, ຈຸດສຸມຄວນຈະຫັນປ່ຽນຈາກການສະໜອງອຸປະກອນ ມາເປັນເອົາໃຈໃສ່ຕໍ່ຫຼັກການ ທີ່ສ້າງຄວາມຕ້ອງການໃນທ້ອງຖິ່ນສໍາລັບແຜນງານ WASH ໃນລະບົບການສຶກສາ - ໂດຍມີຈຸດເນັ້ນໜັກໃສ່ການເຮັດໃຫ້ໂຮງຮຽນ ມີປະສິດທິຜົນຫຼາຍຂຶ້ນໃນການສະໜອງສະພາບແວດລ້ອມທີ່ດີຕໍ່ສຸຂະພາບຂອງເດັກ ແລະ ສົ່ງເສີມພຶດຕິກໍາດ້ານສຸຂະອະນາໄມໃນທາງບວກ.

## ການປະສົມປະສານຜົນຮັບຈາກການວິເຄາະບັນຫາທີ່ເປັນຂອດຄໍ້າງຄາ ຂອງແຜນງານ WASH ໃນໂຮງຮຽນ ຂອງອົງການ UNICEF

| ປະເພດ | ຕົວກຳນົດ | ຕົວຢ່າງຂອງຕົວຊີ້ວັດ (ແຕກຕ່າງກັນໃນແຕ່ລະປະເທດ) | ການຮອມຜົນປະເມີນໃນທົ່ວໂລກ |
|---|---|---|---|
| **ສະພາບແວດລ້ອມທີ່ເອື້ອອຳນວຍ** | ນິຕິກຳ/ກອບນະໂຍບາຍ | ມີນະໂຍບາຍ ແລະ ນິຕິກຳທີ່ແທດເໝາະ | 80% |
| | ງົບປະມານ/ລາຍຈ່າຍ | ການຈັດສັນງົບປະມານແຫ່ງຊາດ ຕາມສັດສ່ວນທີ່ຕ້ອງການ | 20% |
| **ອຸປະທານ/ ການສະໜອງ** | ສິ່ງອຳນວຍຄວາມສະດວກ | ອັດຕາສ່ວນຂອງໂຮງຮຽນ ທີ່ມີສິ່ງອຳນວຍຄວາມສະດວກດ້ານນໍ້າ ແລະ ສຸຂະພິບານຊົມໃຊ້ | 60% |
| | ສິ່ງອຳນວຍຄວາມສະດວກ | ອັດຕາສ່ວນຂອງໂຮງຮຽນ ທີ່ມີສຸຂະພິບານ ແລະ ສິ່ງອຳນວຍຄວາມສະດວກໃນການລ້າງມືທີ່ພຽງພໍ | 40% |
| | ຊັບພະຍາກອນມະນຸດ | ອັດຕາສ່ວນຂອງໂຮງຮຽນ ທີ່ມີຄູສອນທີ່ໄດ້ຮັບການຝຶກອົບຮົມດ້ານການສົ່ງເສີມການລ້າງມື | 30% |
| **ອຸປະສົງ/ ຄວາມຕ້ອງການ** | ອຸປະສັກດ້ານວັດທະນະທຳ-ສັງຄົມ | ອັດຕາສ່ວນຂອງໂຮງຮຽນ ທີ່ມີຫ້ອງນໍ້າ ແລະ ສິ່ງອຳນວຍຄວາມສະອາດໃນການລ້າງມືທີ່ສະອາດ ແລະ ໄດ້ຮັບການບົວລະບັດຮັກສາຢ່າງດີ | 15% |
| | ອຸປະສັກດ້ານການເງິນພາຍໃນ | ອັດຕາສ່ວນຂອງງົບປະມານສໍາບັບການບົວລະບັດຮັກສາສິ່ງອຳນວຍຄວາມສະດວກດ້ານ WASH ແລະ ຈັດຊື້ສະບູ | 20% |
| **ຄຸນນະພາບ** | ການປະຕິບັດ ທີ່ຖືກຫຼັກອະນາໄມ | ອັດຕາສ່ວນຂອງເດັກທີ່ລ້າງມືດ້ວຍສະບູ ພາຍຫລັງນໍ້ໃຊ້ຫ້ອງນໍ້າ ແລະ ກ່ອນຮັບປະທານອາຫານ | 5% |

# ເອກະສານອ້າງອີງທ້າຍເຫຼັ້ມ - Endnotes


1 *In countries where there are limited or no national standards, the global standards set by WHO and UNICEF should be applied. See*: United Nations Children's Fund and World Health Organization, 'Water Sanitation and Hygiene Standards for Schools in Low-Cost Settings', WHO, Geneva, 2009.

2 Ibid.

3 De Albuquerque, Catarina, and Virginia Roaf, 'On the Right Track: Good practices in realising the rights to water and sanitation', Office of the High Commissioner for Human Rights, United Nations, March 2012, pp. 23–24.

4 United Nations Children's Fund and World Health Organization, 'Water Sanitation and Hygiene Standards for Schools in Low-Cost Settings', WHO, Geneva, 2009, p. 12.

5 World Health Organization, *WHO Guidelines on Hand Hygiene in Health Care: First Global Patient Safety Challenge – Clean care is safer care*, WHO, Geneva, 2009, p. 31; and Shordt, Kathleen, 'Review of Hand Washing Programs', IRC International Water and Sanitation Centre, Delft, Netherlands, 2006, p. 6.

6 Freeman, Matthew C., et al., 'Assessing the Impact of a School-Based Water Treatment, Hygiene and Sanitation Programme on Pupil Absence in Nyanza Province, Kenya: A cluster-randomized trial', *Tropical Medicine and International Health*, vol. 17, no. 3, March 2012, pp. 380–391.

7 United Nations Children's Fund and World Health Organization, 'Water Sanitation and Hygiene Standards for Schools in Low-Cost Settings', WHO, Geneva, 2009, p. 30.

8 *For more information on the Fit for School framework, see*: Benzian, Habib, et al., 'Public Health in Action: Effective school health needs renewed international attention', *Global Health Action*, vol. 5, 2012, pp. 1–3.

9 Jasper, Christian, Thanh-Tam Le and Jamie Bartram, 'Water and Sanitation in Schools: A systematic review of the health and educational outcomes', *International Journal of Environmental Research and Public Health*, vol. 9, no. 8, 3 August 2012, pp. 2772–2787; and Ejemot, Regina I., et al., 'Hand Washing for Preventing Diarrhoea', *Cochrane Database of Systematic Reviews*, no. 3, article no. CD004265, 2009, pp. 1–44.

10 Aiello, Allison E., Elaine L. Larson and Richard Sedlak, 'Personal Health: Bringing good hygiene home', *American Journal of Infection Control*, vol. 36, no. 10, Supplement, December 2008, pp. S152–S165.

11 Bolt, Eveline, and Sandy Cairncross, 'Sustainability of Hygiene Behaviour and the Effectiveness of Change Interventions: Lessons learned on research methodologies and research implementation from a multi-country research study, Booklet 2', IRC International Water and Sanitation Centre, Delft, Netherlands, March 2004, pp. 50–52; and Curtis, Valerie A., Lisa O. Danquah and Robert V. Aunger, 'Planned, Motivated and Habitual Hygiene Behaviour: An eleven country review', *Health Education Research*, vol. 24, 2009, pp. 655–673.

12 Mathew, Kochurani, et al., 'The Sustainability and Impact of School Sanitation, Water and Hygiene Education in Kerala, Southern India', IRC International Water and Sanitation Centre, Delft, Netherlands, 2009, p. 21.

13 Njuguna, Vincent, et al., 'The Sustainability and Impact of School Sanitation, Water and Hygiene Education in Kenya', IRC International Water and Sanitation Centre, Delft, the Netherlands, 2009, p. 24.

14 Hutton, Guy, and Laurence Haller, 'Evaluation of the Costs and Benefits of Water and Sanitation Improvements at the Global Level', World Health Organization, Geneva, 2004, p. 29.

15 Edmonds, Caroline J., and Denise Burford, 'Should Children Drink More Water? The effects of drinking water on cognition in children', *Appetite*, vol. 52, no. 3, June 2009, pp. 776–779; and Fadda, R., et al., 'Effects of Drinking Supplementary Water at School on Cognitive Performance in Children', *Appetite*, vol. 59, no. 3, December 2012, pp. 730–737.

16 Bowen, Anna, et al., 'A Cluster-Randomized Controlled Trial Evaluating the Effect of a Handwashing-Promotion Program in Chinese Primary Schools', *American Journal of Tropical Medicine and Hygiene*, vol. 76, no. 6, 2007, pp. 1166–1173.

17 Talaat, Maha, et al., 'Effects of Hand Hygiene Campaigns on Incidence of Laboratory-Confirmed Influenza and Absenteeism in Schoolchildren, Cairo, Egypt', *Emerging Infectious Diseases*, vol. 17, no. 4, April 2011, pp. 1–16.

18 O'Reilly, C. E., et al., 'The Impact of a School-Based Safe Water and Hygiene Programme on Knowledge and Practices of Students and Their Parents: Nyanza Province, western Kenya, 2006', *Epidemiology & Infection*, vol. 136, no. 1, January 2008, pp. 80–91.

19 Monse, Bella, et al., 'The Fit for School Health Outcome Study: A longitudinal survey to assess health impacts of an integrated school health programme in the Philippines', *BMC Public Health*, vol. 13, no. 256, 2013, pp. 1–10.

20 Lopez-Quintero, Catalina, Paul Freeman and Yehuda Neumark, 'Hand Washing among School Children in Bogotá, Colombia', *American Journal of Public Health*, vol. 99, no. 1, January 2009, pp. 94–101.

21 *See, for example*: Nauges, Céline, and Jon Strand, 'Water Hauling and Girls' School Attendance: Some new evidence from Ghana', *Policy Research Working Paper*, no. 6443, World Bank, Washington, D.C., May 2013.

22 United Nations Children's Fund, 'Water, Sanitation and Hygiene Annual Report 2012', UNICEF, New York, 2013, p. 24.

23 United Nations Children's Fund, Regional Office for South Asia, 'WASH for School Children: State-of-the-art in Afghanistan, Bangladesh, Bhutan, India, Maldives, Nepal, Pakistan and Sri Lanka', Provisional Draft, UNICEF ROSA, Kathmandu, 2012, pp. 9–42.

24 Republic of Kenya, United Nations Children's Fund, and Water and Sanitation Program, 'Are Your Hands Clean Enough? Study findings on handwashing with soap behaviour in Kenya', WSP-Africa Region Office, Nairobi, 2009, p. 46.

25 Freeman, Matthew C., et al., 'Assessing the Impact of a School-Based Water Treatment, Hygiene and Sanitation Programme on Pupil Absence in Nyanza Province, Kenya: A cluster-randomized trial', *Tropical Medicine and International Health*, vol. 17, no. 3, March 2012, pp. 380–391.

# ການຈົດບັນທຶກ








Healthy People Healthy Nation
USE CLEAN WATER
CLEAN HANDS SAVE LIVES
WASH your hands with SOAP+WATER


WASH CLUB





ໃນປະຈຸບັນ ອົງການ UNICEF ເປັນອົງການໃຫຍ່ທີ່ສຸດແຫ່ງດຽວ ທີ່ເຮັດວຽກໃນຂະແໜງ WASH ໃນໂຮງຮຽນ. ໃນລະດັບໂລກ, ອົງການ UNICEF ເປັນຜູ້ນໍາພາເຄືອຂ່າຍ WASH ໃນໂຮງຮຽນ, ເຊິ່ງໄດ້ມີການເພີ່ມຈໍານວນຜູ້ມີສ່ວນຮ່ວມໃນຂະແໜງການຫຼາຍຂຶ້ນນັບຕັ້ງແຕ່ມີການສ້າງຕັ້ງຂຶ້ນໃນປີ 2010. *Raising Even More Clean Hands,* ເປັນສິ່ງພິມທີ່ສໍາຄັນຂອງເຄືອຂ່າຍ, ເຊິ່ງໄດ້ເປີດໂຕໃນປີ 2012 ໂດຍໄດ້ຮັບການຮັບຮອງຈາກ 70 ອົງການຈັດຕັ້ງສາກົນ.

ເນື່ອງຈາກມີການໂຄສະນາຂອງເຄືອຂ່າຍ WASH ໃນໂຮງຮຽນ, ຄະນະກໍາມະການວິຊາການ ຂອງແຜນງານຕິດຕາມຮ່ວມກັນລະຫວ່າງ ອົງການ WHO/ UNICEFທີ່ເຮັດວຽກສໍາລັບວາລະສໍາຄັນພາຍຫຼັງເປົ້າໝາຍ MDG ໄດ້ກໍານົດເປົ້າໝາຍຈະແຈ້ງ ແລະ ຄໍາແນະນໍາຕ່າງໆ ກ່ຽວກັບ "ສາມາດເຂົ້າເຖິງ WASH ໃນໂຮງຮຽນ ໃຫ້ໄດ້ຢ່າງທົ່ວເຖິງ ພາຍໃນປີ 2030". ເປົ້າໝາຍດັ່ງກ່າວນີ້ ແມ່ນໄດ້ຮັບການແລກປ່ຽນກັບບັນດາຄູ່ຮ່ວມງານສາກົນ ແລະ ຈະຂະຫຍາຍໄປເຖິງຊຸມຊົນຢ່າງກວ້າງຂວາງ ທີ່ເຊິ່ງກໍາລັງປຶກສາຫາລື ແລະ ວາງແຜນອະນາຄົດສໍາລັບຂະແໜງນໍ້າ ແລະ ອະນາໄມ.

ອົງການ UNICEF ໃຫ້ການສະໜັບສະໜູນ ກິດຈະກໍາ WASH ໃນໂຮງຮຽນ ໂດຍຜ່ານຫ້ອງການຜູ້ຕາງໜ້າ ຢູ່ 95 ປະເທດ. ໃນປີ 2012, ການລິເລີ່ມໃໝ່ໆຂອງອົງການ UNICEFໄດ້ເຂົ້າເຖິງໂຮງຮຽນ 19,000 ແຫ່ງ, ເຊິ່ງມີນັກຮຽນຫຼາຍກວ່າ 4 ລ້ານຄົນໄດ້ຮັບຜົນປະໂຫຍດຈາກກິດຈະກໍາດັ່ງກ່າວ. ກິດຈະກໍາແມ່ນມີຫຼາກຫຼາຍ ນັບແຕ່ກິດຈະກໍາເພື່ອປັບປຸງເລັກນ້ອຍ ຈົນໄປເຖິງແຜນງານສະໜັບສະໜູນແບບຮອບດ້ານ. ການສະໜັບສະໜູນຂະໜາດນ້ອຍ ແມ່ນແນໃສ່ໂມ້ມນ້າວແຜນງານ ແລະ ຍຸດທະສາດລະດັບຊາດ ທີ່ສ່ວນໃຫຍ່ແມ່ນນໍາໃຊ້ໃນບັນດາປະເທດທີ່ມີລາຍໄດ້ປານກາງ. ແຜນງານແບບຮອບດ້ານ ສ່ວນໃຫຍ່ແມ່ນສໍາລັບບັນດາປະເທດທີ່ມີລາຍໄດ້ຕໍ່າ, ເຊິ່ງອົງການ UNICEF ກໍາລັງໃຫ້ການສະໜັບສະໜູນການພັດທະນາມາດຕະຖານ, ການຝຶກອົບຮົມຄູ, ການສົ່ງເສີມສຸຂະອະນາໄມ, ການກໍ່ສ້າງສິ່ງອໍານວຍຄວາມສະດວກ WASH ໃນໂຮງຮຽນ ແລະ ກິດຈະກໍາອື່ນໆອີກ.

ອົງກອນຄວາມຮ່ວມມືລະຫວ່າງປະເທດ (GIZ) GmbH ກໍາລັງຈັດຕັ້ງປະຕິບັດແຜນງານ ແລະ ໂຄງການຕ່າງໆ ເພື່ອການພັດທະນາຢ່າງຍືນຍົງ ໂດຍຕາງໜ້າໃຫ້ແກ່ລັດຖະບານເຢຍລະມັນ ໃນຫຼາຍກວ່າ 130 ປະເທດ.

ອົງການ GIZ ສະໜັບສະໜູນຂະແໜງນໍ້າ, ການສຶກສາ ແລະ ສາທາລະນະສຸກ ໃນຫຼາຍກວ່າ 100 ປະເທດ. ໃນປີ 2012, ໂຄງການສຸຂະພາບດີໃນໂຮງຮຽນ (Fit for School Approach) ທີ່ເປັນແຜນງານຮ່ວມລະຫວ່າງຂະແໜງການ ແມ່ນໄດ້ຮັບການຈັດຕັ້ງປະຕິບັດໂດຍຄູ່ຮ່ວມງານລັດຖະບານ ໃນປະເທດກໍາປູເຈຍ, ອິນໂດເນເຊຍ, ສປປ ລາວ ແລະ ຟີລິບປິນ, ເຊິ່ງມີເດັກຫຼາຍກວ່າ 2.5 ລ້ານຄົນ ໄດ້ຮັບຜົນປະໂຫຍດຈາກແຜນງານດັ່ງກ່າວ.

ຄູ່ມືພາກສະໜາມສະບັບນີ້ ບັນຍາຍເຖິງຫຼັກການສາມດາວ ສໍາລັບແຜນງານ WASH ໃນໂຮງຮຽນ ເຊິ່ງ:

- ເນັ້ນໜັກກິດຈະກໍາປະຈໍາວັນຂອງກຸ່ມນັກຮຽນ ເພື່ອປັບປຸງປະສິດທິຜົນຂອງການສົ່ງເສີມສຸຂະອະນາໄມ ພ້ອມດຽວກັນກໍ່ຮັບປະກັນວ່າເດັກໄດ້ເຂົ້າເຖິງສິ່ງອໍານວຍຄວາມສະດວກດ້ານສຸຂະພິບານ ແລະ ນໍ້າດື່ມທີ່ສະອາດ ໃນໂຮງຮຽນ.
- ຊຸກຍູ້ໃຫ້ມີການສະໜັບສະໜູນຈາກຊຸມຊົນເຈົ້າພາບ ແລະ ບໍ່ໃຫ້ເອື່ອຍອີງໃສ່ອຸປະກອນດ້ານວັດຖຸອຸປະກອນ (hardware inputs) ທີ່ມີລາຄາແພງ.

ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບ ຫຼັກການສາມດາວ ເພື່ອສ້າງ ແຜນງານ WASH ຢູ່ໂຮງຮຽນ, ກະລຸນາຕິດຕໍ່ Murat Sahin, msahin@unicef.org, ຫຼື Bella Monse, bella.monse@giz.de.